ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

BANQUE POUR LE COMMERCE EXTERIEUR LAO PUBLIC




# ບົດລາຍງານການເຄື່ອນໄຫວທຸລະກິດ

## ສຳລັບໄລຍະ 06 ເດືອນຕົ້ນປີ 2023

## ທີ່ສິ້ນສຸດວັນທີ 30 ມິຖຸນາ 2023

# I. ສະພາບລວມຂອງ ທຄຕລ

## 1. ວິໄສທັດ

ທຄຕລ ໄດ້ຮັບການປັບປຸງວິໄສທັດຂອງຕົນຄືນໃໝ່ ໃນແຜນຍຸດທະສາດໄລຍະຍາວ 2021 – 2025 ເພື່ອປະກອບເຂົ້າໃນການພັດທະນາວຽກງານຂອງຕົນໃຫ້ບັນລຸຕາມເປົ້າໝາຍ ແລະ ວັດຖຸປະສົງຄື: **"ເປັນທະນາຄານທີ່ເຂັ້ມແຂງ ທັນສະໄໝ ໄດ້ມາດຕະຖານສາກົນ".**

## 2. ພາລະກິດ

ເພື່ອເຮັດໃຫ້ ທຄຕລ ກາຍເປັນທະນາຄານທີ່ເຂັ້ມແຂງ ທັນສະໄໝ ໄດ້ມາດຕະຖານສາກົນ ພາລະກິດຫຼັກທີ່ສຳຄັນຂອງ ທຄຕລ ທີ່ຈະຕ້ອງໄດ້ສຸມໃສ່ ແມ່ນການພັດທະນາປັບປຸງດ້ານການບໍລິການ ໃຫ້ແທດເໝາະກັບໄລຍະການປ່ຽນແປງໃໝ່, ສ້າງຄວາມເຂັ້ມແຂງໝັ້ນຄົງທາງດ້ານການເງິນ ແລະ ສອດຄ່ອງຕາມຫຼັກການບາເຊວ 2, ພັດທະນາລະບົບໄອທີ ແລະ ເທັກໂນໂລຊີທີ່ທັນສະໄໝ ເຂົ້າໃນລະບົບບໍລິການ, ພັດທະນາດ້ານລະບົບຂໍ້ມູນຂ່າວສານໃຫ້ຖືກຕ້ອງ, ຊັດເຈນ, ໂປ່ງໃສ, ວ່ອງໄວ ແລະ ຮັບປະກັນຄວາມປອດໄພໄດ້ມາດຕະຖານສາກົນ. ພ້ອມນັ້ນ, ກໍ່ເນັ້ນໃສ່ການພັດທະນາບຸກຄະລາກອນໃນແຕ່ລະດ້ານ ໃຫ້ມີຄວາມຊຳນິຊຳນານ, ເປັນມືອາຊີບດ້ານການບໍລິການທະນາຄານ ເພື່ອຮອງຮັບການປ່ຽນແປງ ແລະ ການພັດທະນາ ທຄຕລ, ພ້ອມທັງສ້າງຄວາມເພິ່ງພໍໃຈໃຫ້ກັບລູກຄ້າທີ່ມາໃຊ້ບໍລິ ການ ແລະ ສ້າງຜົນປະໂຫຍດສູງສຸດໃຫ້ແກ່ຜູ້ຖືຮຸ້ນ ທຄຕລ ແບບຍືນຍົງ.

### ❖ ແຜນງານ ແລະ ໂຄງການ 2023

ເພື່ອເຮັດໃຫ້ ທຄຕລ ໄດ້ພັດທະນາປັບປຸງ ແລະ ສ້າງຄວາມເຂັ້ມແຂງໝັ້ນຄົງຍືນຍົງ ກາຍເປັນທະນາຄານທີ່ນຳໜ້າໃນດ້ານຄວາມທັນສະໄໝ, ໄດ້ມາດຕະຖານສາກົນ ໃນລະບົບທະນາຄານ ໃນ ສປປ ລາວ. ທຄຕລ ໄດ້ກຳນົດຍຸດທະສາດການພັດທະນາ ເພື່ອກຳນົດບັນດາທິດທາງ, ຄາດໝາຍ ແລະ ແຜນການຈັດຕັ້ງປະຕິບັດລະອຽດ ເຊິ່ງແຜນງານ ແລະ ໂຄງການທີ່ຈັດຕັ້ງປະຕິບັດໃນປີ 2023 ປະກອບມີ 11 ແຜນງານ ແລະ 38 ໂຄງການ ດັ່ງລາຍລະອຽດລຸ່ມນີ້:

- **ຍຸດທະສາດທີ 1: ສ້າງຄວາມເຂັ້ມແຂງໃຫ້ອົງກອນຢ່າງຮອບດ້ານ** (ປະກອບມີ 5 ແຜນງານ ແລະ 20 ໂຄງການ)
  - ການບໍລິຫານການເງິນ ແລະ ເພີ່ມປະສິດທິພາບການດຳເນີນທຸລະກິດໃຫ້ຍືນຍົງ ປະກອບມີ 5 ໂຄງການ;
  - ການຄຸ້ມຄອງ ແລະ ບໍລິຫານສິນເຊື່ອ ປະກອບມີ 5 ໂຄງການ;
  - ການພັດທະນາບໍລິຫານບຸກຄະລາກອນ ໃຫ້ເຂັ້ມແຂງ ແລະ ມີປະສິທິພາບ ປະກອບມີ 4 ໂຄງການ;
  - ສ້າງລະບົບຄຸ້ມຄອງຄວາມສ່ຽງ ແລະ ສ້າງພື້ນຖານຕ້ານການຟອກເງິນໃຫ້ເຂັ້ມແຂງ ປະກອບມີ 5 ໂຄງການ;
  - ພັດທະນາການຄຸ້ມຄອງບໍລິຫານໃຫ້ໄດ້ມາດຖານສາກົນ ປະກອບມີ 1 ໂຄງການ.
- **ຍຸດທະສາດທີ 2: ຍຸດທະສາດຫັນເປັນທັນສະໄໝ ໂດຍນຳໃຊ້ເຕັກໂນໂລຊີ ແລະ ນະວັດຕະກຳໃໝ່ໆໃນການດຳເນີນທຸລະກິດ ກ້າວສູ່ຍຸກເສດຖະກິດດິຈິຕອລ** (ປະກອບມີ 3 ແຜນງານ ແລະ 13 ໂຄງການ)
  - ການພັດທະນາ ແລະ ຄຸ້ມຄອງລະບົບໄອທີ ປະກອບມີ 6 ໂຄງການ;
  - ຄຸ້ມຄອງບໍລິຫານຂໍ້ມູນ ແລະ ການພັດທະນາວຽກງານສະຖິຕິ ໃຫ້ທັນສະໄໝໄດ້ມາດຕະຖານສາກົນ ແລະ ມີຄຸນນະພາບ ປະກອບມີ 5 ໂຄງການ;
  - ພັດທະນາຜະລິດຕະພັນ ເພື່ອຫັນສູ່ການບໍລິການໃນຮູບແບບ Digital Banking ປະກອບມີ 2 ໂຄງການ;

- **ຍຸດທະສາດທີ 3: ຍຸດທະສາດສ້າງການຄຸ້ມຄອງ ແລະ ບໍລິການຕາມມາດຕະຖານສາກົນ** (ປະກອບມີ 3 ແຜນງານ ແລະ 5 ໂຄງການ)
  - ການປັບປຸງ, ພັດທະນາລະບົບບັນຊີ ແລະ ມາດຕະຖານການລາຍງານການເງິນ ປະກອບມີ 3 ໂຄງການ;
  - ພັດທະນາ ແລະ ປັບປຸງລະບົບກວດກາໃຫ້ເຂັ້ມແຂງໄດ້ມາດຕະຖານ ປະກອບມີ 2 ໂຄງການ;
  - ພັດທະນາໂຄງການ PCI Compliance ຫຼື Payment Card Industry Data Security Standard.

## II. ຖານະການເງິນ ແລະ ຜົນດຳເນີນງານ

### 1. ເສດຖະກິດມະຫາພາກ ສປປ ລາວ ແລະ ທ່າອ່ຽງໃນຕໍ່ໜ້າ

ໃນໄລຍະ 6 ເດືອນຕົ້ນປີ 2023 ໂດຍລວມ, ພາຍຫຼັງການແຜ່ລະບາດຂອງໂຄວິດ-19 ຜ່ອນຄາຍລົງຢ່າງຕໍ່ເນື່ອງ ຈຶ່ງເຮັດໃຫ້ສະພາບການຜະລິດ ແລະ ການບໍລິການໄດ້ມີທ່າອ່ຽງຂະຫຍາຍຕົວພໍສົມຄວນ, ເຊິ່ງລວມຍອດຜະລິດຕະພັນພາຍໃນ GDP ຂະຫຍາຍຕົວໃນລະດັບ 4,8% (ມະຕິສະພາໝົດປີໃຫ້ບັນລຸ 4,5%), ສຳລັບອົງການ IMF ຄາດຄະເນ ເສດຖະກິດ ສປປ ລາວ ໝົດປີຈະຂະຫຍາຍຕົວໃນອັດຕາ 4%, ທະນາຄານໂລກ 3,8%, ທະນາຄານພັດທະນາອາຊີ 4%. ເຖິງຢ່າງໃດກໍ່ຕາມ, ເສດຖະກິດມະຫາພາກຍັງບໍ່ມີຄວາມແນ່ນອນຫຼາຍດ້ານ, ເປັນຕົ້ນຂໍ້ຂັດແຍ່ງລະຫວ່າງປະເທດ ທີ່ສົ່ງຜົນກະທົບຕໍ່ການເໜັງຕີງລາຄາສິນຄ້າບາງລາຍການໃນການຕະຫຼາດໂລກ, ການອ່ອນຄ່າຂອງເງິນກີບ, ການຜະລິດສິນຄ້າ ແລະ ບໍລິການເພື່ອທົດແທນການນຳເຂົ້າຍັງບໍ່ທັນແຂງແຮງ ຍັງເປັນສິ່ງທ້າທາຍສຳລັບການຂະຫຍາຍຕົວຂອງເສດຖະກິດລາວ 6 ເດືອນ ທ້າຍປີ 2023.

### 1.1. ອັດຕາເງິນເຟີ້

ສະພາບລວມຂອງອັດຕາເງິນເຟີ້ ປະຈຳເດືອນມິຖຸນາ 2023 ຢູ່ໃນລະດັບ 28,64% ທຽບໃສ່ເດືອນ ມິຖຸນາ 2022 ທີ່ລະດັບ 23,6%. ສະເລ່ຍ 6 ເດືອນຕົ້ນປີ 2023 ແມ່ນ 38,06% (6 ເດືອນ ຕົ້ນປີ 2022 ສະເລ່ຍ 11,4%) ສາເຫດທີ່ເຮັດໃຫ້ອັດຕາເງິນເຟີ້ເພີ່ມຂຶ້ນສູງແມ່ນຍ້ອນການເໜັງຕີງເພີ່ມຂຶ້ນຂອງໝວດສິນຄ້າຕົ້ນຕໍ ເຊັ່ນ: ໝວດສະບຽງອາຫານ ແລະ ເຄື່ອງດື່ມບໍ່ແມ່ນທາດເຫຼົ້າ ເພີ່ມຂຶ້ນ 49,1%, ໝວດຮັກສາສຸຂະພາບ ແລະ ຢາ ເພີ່ມຂຶ້ນ 38,8%, ໝວດຮ້ານອາຫານ ໂຮງແຮມ ເພີ່ມຂຶ້ນ 35,2%,ໝວດຄົມມະນາຄົມ ແລະ ຂົນສົ່ງ ເພີ່ມຂຶ້ນ 33%, ໝວດເຄື່ອງໃຊ້ໃນເຮືອນ ເພີ່ມຂຶ້ນ 32,9% ແລະ ອື່ນໆ. ນອກຈາກນີ້, ການສືບຕໍ່ອ່ອນຄ່າຂອງເງິນກີບ ເປັນປັດໃຈສຳຄັນທີ່ເຮັດໃຫ້ອັດຕາເງິນເຟີ້ຍັງຢູ່ໃນລະດັບສູງ.[1]

### 1.2. ອັດຕາແລກປ່ຽນ

ອັດຕາແລກປ່ຽນລະບົບທະນາຄານ ສຳລັບເງິນໂດລາ ສະເລ່ຍ ໃນເດືອນ 06/2023 ແມ່ນ 18.539 ກີບ/ໂດລາ ເພີ່ມຂຶ້ນເຖິງ 25,91% ທຽບປີຕໍ່ປີ (ຈາກ 14.724 ກີບ/ໂດລາ), ໃນຂະນະທີ່ອັດຕາແລກປ່ຽນນອກລະບົບ ສະເລ່ຍ 19.578 ກີບ/ໂດລາ ເພີ່ມຂຶ້ນ 12,63% ທຽບໃສ່ໄລຍະດຽວກັນ (ຈາກ 17.382 ກີບ/ໂດລາ). ສຳລັບອັດຕາແລກປ່ຽນເງິນບາດ, ທີ່ວລະບົບທະນາຄານ ສະເລ່ຍ 551,45 ກີບ/ບາດ ເພີ່ມຂຶ້ນ 15,15% ທຽບໃສ່ປີຜ່ານມາ, ໃນຂະນະທີ່ອັດຕາແລກປ່ຽນນອກລະບົບ ສະເລ່ຍ 567,14 ກີບ/ບາດ ເພີ່ມຂຶ້ນປະມານ 12,36% (ຂໍ້ມູນຈາກທະນາຄານແຫ່ງ ສປປ ລາວ). ການອ່ອນຄ່າເງິນກີບແມ່ນຍັງສືບຕໍ່ອ່ອນຄ່າ ເນື່ອງຈາກປັດໄຈພາຍໃນ ແລະ ປັດໄຈພາຍນອກ, ແນວໃດກໍ່ຕາມໃນ 6 ເດືອນ ທ້າຍປີ 2023 ທຫລ ຈະສືບຕໍ່ດຳເນີນນະໂຍບາຍເງິນຕາໃນທິດທາງທີ່ຮັດກຸມຫຼາຍຂຶ້ນ ແລະ ປະຕິບັດນະໂຍບາຍອັດຕາແລກປ່ຽນຕາມກົນໄກຕະຫຼາດທີ່ມີການຄຸ້ມຄອງຂອງລັດໃຫ້ຮັດກຸມຍິ່ງຂຶ້ນ.[2]

---

[1] ບົດລາຍງານສະພາບອັດຕາເງິນເຟີ້ ປະຈຳເດືອນ ມິຖຸນາ 2023

[2] Bank of Lao PDR Facebook Page, Date 26/06/2023

### 1.3. ສະພາບການນໍາເຂົ້າ-ສົ່ງອອກ ແລະ ການລົງທຶນ

ມູນຄ່າການນໍາເຂົ້າ ແລະ ສົ່ງອອກ ຂອງ ສປປ ລາວ 6 ເດືອນ ຕົ້ນປີ 2023 ຄາດຄະເນຈະປະຕິບັດໄດ້ປະມານ 7.546,04 ລ້ານໂດລາສະຫະລັດ. ໃນນັ້ນ, ມູນຄ່າການສົ່ງອອກ ຄາດຄະເນຈະປະຕິບັດໄດ້ປະມານ 4.272,15 ລ້ານໂດລາ, ມູນຄ່າການນໍາເຂົ້າ ຄາດຄະເນຈະປະຕິບັດໄດ້ປະມານ 3.273,89 ລ້ານໂດລາ ແລະ ຄາດຄະເນຈະເກີນດຸນການຄ້າປະມານ 998,26 ລ້ານໂດລາ. ສິນຄ້າທີ່ສົ່ງອອກຫຼາຍ ປະກອບມີ: ໄຟຟ້າ, ຄໍາປະສົມ ແລະ ຄໍາແທ່ງ, ມັນຕົ້ນ ເຈ້ຍ ແລະ ເຄື່ອງທີ່ເຮັດດ້ວຍເຈ້ຍ, ເກືອກາລີ, ແຮ່ທອງ ແລະ ອື່ນໆ. ສິນຄ້າທີ່ນໍາເຂົ້າຫຼາຍ ປະກອບມີ: ນໍ້າມັນກາຊວນ, ພາຫະນະທາງບົກ, ເຄື່ອງໄຟຟ້າ ແລະ ອຸປະກອນໄຟຟ້າ[3] ແລະ ອື່ນໆ.

## 2. ການເຄື່ອນໄຫວທີ່ພົ້ນເດັ່ນໂດຍຫຍໍ້ ຂອງ ທຄຕລ

ໃນໄລຍະ 6 ເດືອນຕົ້ນປີ 2023 ທຄຕລ ໄດ້ຈັດກອງປະຊຸມສະຫຼຸບການເຄື່ອນໄຫວວຽກງານຂອງຕົນຈໍານວນ 2 ຄັ້ງ (ກອງປະຊຸມປະຈໍາປີ 2022 ແລະ ປະຈໍາໄຕມາດ 1/2023), ຈັດກອງປະຊຸມສະພາບໍລິຫານສະໄໝສາມັນ 1 ຄັ້ງ ແລະ ຈັດກອງປະຊຸມສາມັນຜູ້ຖືຮຸ້ນ ປະຈໍາປີ 2022 ພ້ອມທັງສໍາເລັດການຈ່າຍເງິນປັນຜົນ ຈໍານວນ 100 ກີບ/ຮຸ້ນ ໃຫ້ແກ່ບັນດາຂາຮຸ້ນ ທຄຕລ. ພ້ອມນັ້ນ, ຄະນະບໍລິຫານງານ ທຄຕລ ໄດ້ເຂົ້າຮ່ວມກອງປະຊຸມພົບປະລະຫວ່າງທະນາຄານແຫ່ງ ສປປ ລາວ ແລະ ທະນາຄານທຸລະກິດ ປະຈໍາປີ 2022, ເຂົ້າຮ່ວມປະຊຸມກັບຄະນະກໍາມະການຮ່ວມມືໃນການຊໍາລະສະສາງລະຫວ່າງ ທຄຕລ ແລະ ສ.ເກົາຫລີ ແລະ ເຂົ້າຮ່ວມກອງປະຊຸມສົນທະນາວິຊາການໃນຫົວຂໍ້: " ການນໍາໃຊ້ສະກຸນເງິນທ້ອງຖິ່ນເຂົ້າໃນການຄ້າ ແລະ ການລົງທຶນລະຫວ່າງປະເທດ "; ໄດ້ສໍາເລັດການເປີດເຜີຍຂໍ້ມູນເອກະສານລາຍງານການເງິນຕາມມາດຕະຖານສາກົນ ປະຈໍາປີ 2022 ແລະ ໄຕມາດ 1/2023, ພ້ອມທັງ ເປີດເຜີຍບົດລາຍງານປະຈໍາປີ 2022 ຂອງ ທຄຕລ; ເຊັນສັນຍາການກວດສອບເອກະສານລາຍງານການເງິນ ທຄຕລ ປະຈໍາປີ 2023 ກັບບໍລິສັດ PWC; ອອກຂໍ້ຕົກລົງຮັບຮອງແຜນການດໍາເນີນທຸລະກິດ ທຄຕລ ປະຈໍາປີ 2023 ພາຍຫຼັງກອງປະຊຸມຜູ້ຖືຮຸ້ນຮັບຮອງ; ອອກຂໍ້ຕົກລົງການຈັດຂັ້ນສາຂາ ແລະ ໜ່ວຍບໍລິການ ປະຈໍາປີ 2023 ພ້ອມທັງ ຮັບຮອງເປົ້າໝາຍ KPI ຂອງບັນດາສາຂາ ປະຈໍາປີ 2023 ແລະ ກໍານົດຕົວຊີ້ວັດ KPI ຂອງ 4 ພາກສ່ວນຢູ່ສໍານັກງານໃຫຍ່; ສໍາເລັດການທົບທວນແຜນຍຸດທະສາດໄລຍະຍາວ ປີ 2021 - 2025 ໄລຍະ 2 ປີ (2021 - 2022); ສໍາເລັດການຈໍາໜ່າຍພັນທະບັດທະນາຄານແຫ່ງ ສປປ ລາວ ງວດທີ 2 ຈໍານວນ 3 ຄັ້ງ.

**ດ້ານການພັດທະນາລະບົບ:** ສໍາເລັດການ Go-Live ນໍາໃຊ້ລະບົບສະໜັບສະໜູນການອະນຸມັດສິນເຊື່ອ LOS (BCEL Loan Origination System) ໃນເຟດ 1; ສໍາເລັດການພັດທະນາລະບົບ ແລະ ອັບເດດຟັງຊັນ ຈໍານວນໜຶ່ງ ປະກອບມີ: ລະບົບພິມໃບຢັ້ງຢືນຂໍ້ມູນບັນຊີເງິນຝາກ, ແບບຟອມເປີດບັນຊີອອນລາຍ, ລະບົບເກັບກໍາຂໍ້ມູນສະຖິຕິພະນັກງານ, ລະບົບຄິວ Fast Track, ຟັງຊັນໃຫ້ Tip ພະນັກງານຜ່ານ Onepay, ເປີດຟັງຊັນຕະຫຼາດແລກປ່ຽນຊື້ຂາຍເງິນຕາ ຜ່ານ Bcel One (Currency Exchange), ຟັງຊັນການຈອງພັນທະບັດ ທຫລ, ຟັງຊັນໂອນເງິນຍ່ອນໄປ WeChat ຜ່ານ BCEL One, OneCash wallet ສໍາລັບນັກທ່ອງທ່ຽວຕ່າງປະເທດ ແລະ ເປີດຟັງຊັນລະບົບຄິວອອນໄລ; ສໍາເລັດການອອກ e-sticker ຄ່າທາງໃໝ່; ສໍາເລັດການພັດທະນາການອອກສິນເຊື່ອ M-loan ຜ່ານແອັບ BCEL One.

**ດ້ານຕາໜ່າງບໍລິການ:** ໄດ້ເປີດໜ່ວຍບໍລິການຊາຍແດນລາວບາວຂຶ້ນກັບສາຂາສະຫວັນນະເຂດ, ຍົກລະດັບ ຫ້ອງບໍລິການໂຍທາທົ່ງປົ່ງ ຂອງສາຂານະຄອນຫຼວງວຽງຈັນ ເປັນໜ່ວຍບໍລິການກອງຄຸ້ມຄອງພາຫະນະ ແລະ ການຂັບຂີ່ ແລະ ໄດ້ປ່ຽນຊື່ ໜ່ວຍບໍລິການນາກະສັງ ຂອງສາຂາຈໍາປາສັກ ເປັນໜ່ວຍບໍລິການເມືອງໂຂງ; ເປີດໃຫ້ບໍລິການແລກປ່ຽນ ໃນວັນເສົາ-ອາທິດ ຄືນໃໝ່ 4 ຈຸດຄື: ຫ້ອງແລກປ່ຽນໜ້າຕຶກສາຂາບໍ່ແກ້ວ, ຫ້ອງແລກປ່ຽນຂົວມິດຕະພາບ 4, ຫ້ອງແລກປ່ຽນສາຂາຫຼວງນໍ້າທາ ແລະ ຫ້ອງແລກປ່ຽນສາຂາຈໍາປາສັກ.

---

[3] ບົດສະຫຼຸບຕີລາຄາການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ໄລຍະ 6 ເດືອນຕົ້ນປີ ແລະ ທິດທາງແຜນວຽກຈຸດສຸມ 6 ເດືອນທ້າຍປີ 2023

**ດ້ານໂຄງຮ່າງການຈັດຕັ້ງ:** ໄດ້ປັບປຸງໂຄງຮ່າງການຈັດຕັ້ງພາຍໃນພະແນກການຕະຫຼາດ ແລະ ບໍລິການລູກຄ້າລາຍໃຫຍ່ຄືນໃໝ່ ເພື່ອໃຫ້ສອດຄ່ອງກັບວຽກງານໃນໄລຍະປະຈຸບັນ ແລະ ໄດ້ສ້າງໜ່ວຍງານການຕະຫຼາດໃໝ່ໃຫ້ 2 ສາຂາຄື: ສາຂາຫຼວງພະບາງ ແລະ ສາຂາວັງວຽງ.

**ດ້ານການຮ່ວມມືທາງທຸລະກິດກັບພາກສ່ວນຕ່າງໆ:** ເຊັນສັນຍາການຮ່ວມມືໂຄງການບັດນັກສຶກສາກັບ 2 ສະຖາບັນການສຶກສາ ຄື: ມະຫາວິທະຍາໄລແຫ່ງຊາດ ແລະ ສະຖາບັນການທະນາຄານ; ຮ່ວມມືກັບບໍລິສັດລົດໄຟລາວ-ຈີນ ໃນການຂາຍປີ້ລົດໄຟອອນລາຍຜ່ານແອັບ LCR ຊໍາລະຜ່ານ BCEL One; ຮ່ວມທຸລະກິດໃນການຂາຍປະກັນໄພຊີວິດ ຜ່ານແອັບ BCEL One ລະຫວ່າງ ທຄຕລ ແລະ ບໍລິສັດ ພຣູເດັນໂຊລ໌ ປະກັນໄພຊີວິດ (ລາວ) ຈໍາກັດ; ຮ່ວມມືກັບບໍລິສັດ Tencent ຂອງ ສປ ຈີນ ໃນໂຄງການໂອນເງິນໄປຈີນຜ່ານ BCEL One ຫາ We-Chat; ຮ່ວມມືກັບ KEB Hana Bank ສ. ເກົາຫຼີ ໃນໂຄງການຊໍາລະຜ່ານລະບົບ GLN ສະແກນ QR Code ຜ່ານ BCELOnePay ແລະ 3 ແອັບຄື: TOSS, KAKAO ແລະ KB.

**ດ້ານວຽກງານການຕະຫຼາດ:** ໄດ້ສໍາເລັດການຈັດໂປຣໂມຊັ່ນ VISA Campaign 33% ໃຫ້ຮ້ານຄ້າ 33 ຮ້ານ; ຈັດໂປຣໂມຊັ່ນ ວັນແຫ່ງຄວາມຮັກ 2023 ຝາກເງິນຝາກໃຈໄວ້ກັບ BCEL; ຈັດງານເທດສະການທ່ອງທ່ຽວເພື່ອສົ່ງເສີມການນໍາໃຊ້ຜະລິດຕະພັນບັດສາກົນ BCEL VISA ເຊິ່ງໄດ້ຮັບສ່ວນຫຼຸດ ເມື່ອຈ່າຍຜ່ານຮ້ານຄ້າທີ່ເຂົ້າຮ່ວມໂຄງການ; ຈັດໂຄງການ BCELOnePay ຂາຍງ່າຍ ຈ່າຍສະບາຍ ແຈກເງິນລ້ານ ລວມມູນຄ່າ 200 ລ້ານກີບ (ສໍາລັບຮ້ານຄ້າ ແລະ ຜູ້ສະແກນຈ່າຍຜ່ານ BCELOnePay); ໂປູໂມຊັ່ນ BCEL One Top-up " ຕື່ມເງິນມື້ນີ້ໄດ້ສ່ຽງຊີລຸ້ນໂຊກ " ລວມມູນຄ່າ 465 ລ້ານກີບ ສໍາລັບລູກຄ້າຂອງລາວໂທລະຄົມ ແລະ T Plus ທີ່ໃຊ້ເບີແບບຕື່ມເງິນ; ໂປູໂມຊັ່ນ " ຊັອບ Fin ທ່ຽວ Fun ໄປກັບ Mastercard "; ຈັດໂປູໂມຊັ່ນຮັບເງິນຄືນ 10% ເມື່ອສະແກນຜ່ານ BCELOnePay ທີ່ D Mart ທຸກສາຂາ, ພ້ອມທັງອອກບູ໊ດຕາມງານເທດສະການຕ່າງໆຢູ່ແຕ່ລະທ້ອງຖິ່ນ ແລະ ອອກບູ໊ດສໍາລັບປ່ຽນ QR ລຸ້ນເກົ່າເປັນລຸ້ນໃໝ່ (LaoQR) ແລະ ໃຫ້ບໍລິການດ້ານຜະລິດຕະພັນຕ່າງໆໃຫ້ແກ່ລູກຄ້າໃນແຕ່ລະໄລຍະ. ນອກຈາກນັ້ນ, ທຄຕລ ຍັງໄດ້ຮັບລາງວັນນັກທຸລະກິດຊັ້ນນໍາດີເດັ່ນ ສຄອຊ ປະຈໍາປີ 2022 (Lao Business Leader Award 2022).

### 3. ຂໍ້ມູນທາງດ້ານການເງິນທີ່ສໍາຄັນຂອງ ທຄຕລ

ໃນໄລຍະ 6 ເດືອນຕົ້ນປີ 2023 ທີ່ຜ່ານມາ ການດໍາເນີນທຸລະກິດຂອງ ທຄຕລ ຍັງປະເຊີນກັບຄວາມຫຍຸ້ງຍາກ ແລະ ສິ່ງທ້າທາຍຫລາຍດ້ານ ເນື່ອງຈາກສະພາບເສດຖະກິດ-ການເງິນໃນພາກພື້ນ ແລະ ສາກົນ ຍັງມີຄວາມຜັນແປຢ່າງສັບສົນ ເນື່ອງຈາກອັດຕາເງິນເຟີ້ ແລະ ລະດັບໜີ້ສິນຂອງໂລກຍັງສູງ, ສໍາລັບ ສປປ ລາວ ເຮົາ ເຖິງແມ່ນວ່າພາບລວມຂອງເສດຖະກິດພວມຢູ່ໃນໄລຍະການຟື້ນຕົວ ແຕ່ກໍ່ຍັງຢູ່ໃນຈັງຫວະທີ່ຊ້າ ເນື່ອງຈາກຍັງພົບກັບບັນຫາຄວາມຫຍຸ້ງຍາກ ທາງດ້ານເສດຖະກິດການເງິນ-ເງິນຕາ (ບັນຫາເງິນເຟີ້, ອັດຕາແລກປ່ຽນ, ລາຄານໍ້າມັນເປັນຕົ້ນ), ພັນທະຊໍາລະໜີ້ສິນຕ່າງປະເທດສູງ, ຄັງແຮສໍາຮອງເງິນຕາຕ່າງປະເທດຕໍ່າ ແລະ ບັນຫາການຜະລິດຍັງບໍ່ທັນແຂງແຮງ ຍັງເປັນສິ່ງທ້າທາຍໃຫຍ່ຫຼວງໃຫ້ແກ່ການຮັກສາສະຖຽນລະພາບ ຂອງເສດຖະກິດມະຫາພາກ. ເຖິງຢ່າງໃດກໍ່ຕາມ ດ້ວຍຄວາມເອົາໃຈໃສ່ຂອງຄະນະບໍລິຫານງານ ແລະ ພະນັກງານທຸກຂັ້ນ ເຮັດໃຫ້ການດໍາເນີນທຸລະກິດຂອງ ທຄຕລ ໄດ້ຮັບການປັບປຸງດີຂຶ້ນເທື່ອລະກ້າວ ຕົວເລກທຸລະກິດຫຼາຍດ້ານໄດ້ປັບຕົວດີຂຶ້ນໃນຈັງຫວະທີ່ດີຕໍ່ເນື່ອງ ເຊິ່ງຮອດທ້າຍໄຕມາດ 2 ປີ 2023 ທຄຕລ ມີຕົວເລກຜົນການດໍາເນີນທຸລະກິດ ດັ່ງລຸ່ມນີ້:

- **ຍອດຊັບສິນ:** 111.241.132 ລ້ານກີບ, ປະຕິບັດໄດ້ລື່ນແຜນການປີ 11,83% ທຽບໃສ່ໄລຍະດຽວກັນຂອງປີຜ່ານມາເພີ່ມຂຶ້ນ 31,73%;
- **ຍອດເງິນກູ້ທັງໝົດ:** 46.309.964 ລ້ານກີບ, ທຽບໃສ່ແຜນການປີ 2023 ປະຕິບັດໄດ້ 92,53% ທຽບໃສ່ໄລຍະດຽວກັນຂອງປີຜ່ານມາເພີ່ມຂຶ້ນ 20,37%;
- **ອັດຕາສ່ວນ NPL:** 3,02%;
- **ຍອດເງິນຝາກ:** 101.134.205 ລ້ານກີບ, ປະຕິບັດໄດ້ລື່ນແຜນການປີ 11,14% ທຽບໃສ່ໄລຍະດຽວກັນຂອງປີຜ່ານມາເພີ່ມຂຶ້ນ 32,21%;

- **ທຶນທັງໝົດ:** 2.454.072 ລ້ານກີບ, ທຽບໃສ່ແຜນການປີ 2023 ປະຕິບັດໄດ້ 89,56% ທຽບໃສ່ໄລຍະດຽວກັນຂອງປີຜ່ານມາເພີ່ມຂຶ້ນ 15,89%;
- **ກໍາໄລ/ຂາດທຶນ ກ່ອນອາກອນ:** 142.694 ລ້ານກີບ, ທຽບໃສ່ແຜນການປີ 2023 ປະຕິບັດໄດ້ 57,08% ແລະ ເພີ່ມຂຶ້ນຫຼາຍເທົ່າຕົວເມື່ອທຽບໃສ່ໄລຍະດຽວກັນຂອງປີຜ່ານມາ;
- **ກໍາໄລ/ຂາດທຶນ ຫຼັງອາກອນ:** 102.022 ລ້ານກີບ, ທຽບໃສ່ແຜນການປີ 2023 ປະຕິບັດໄດ້ 51,01% ແລະ ເພີ່ມຂຶ້ນຫຼາຍເທົ່າຕົວເມື່ອທຽບໃສ່ໄລຍະດຽວກັນຂອງປີຜ່ານມາ.

## III. ຂໍ້ມູນທົ່ວໄປ ແລະ ຂໍ້ມູນສຳຄັນບາງດ້ານ ຂອງ ທຄຕລ

- **ທີ່ຕັ້ງ ແລະ ເຄືອຂ່າຍ**

ສຳນັກງານໃຫຍ່ຂອງທະນາຄານ ຕັ້ງຢູ່ເລກທີ 01, ຖະໜົນປາງຄຳ, ບ້ານຊຽງຍືນ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ. ນະວັນທີ 30 ມິຖຸນາ 2023 ທະນາຄານມີ (1) ສຳນັກງານໃຫຍ່, (6) ວິສາຫະກິດຂາຮຸ້ນ ແລະ ວິສາຫະກິດປະສົມ, (20) ສາຂາ, (98) ໜ່ວຍບໍລິການ ແລະ (11) ຫ້ອງແລກປ່ຽນເງິນຕາ ທົ່ວ ສປປ ລາວ.

**ຕິດຕໍ່ ແລະ ພົວພັນ ສອບຖາມຂໍ້ມູນຕ່າງໆຂອງ ທຄຕລ**

- ເບີໂທ (+856-21) 213200 ຫຼື ໂທ 1555
- ແຟັກ (+856-21) 213202
- ອີເມວ: bcelhqv@bcel.com.la
- ເວັບໄຊ: www.bcel.com.la

- **ປະຫວັດຄວາມເປັນມາໂດຍຫຍໍ້ ຂອງ ທຄຕລ**

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ດຳເນີນທຸລະກິດໃນຮູບແບບມະຫາຊົນ ແລະ ຈົດທະບຽນຢູ່ໃນຕະຫຼາດຫຼັກຊັບ ສປປ ລາວ.

ທະນາຄານການຄ້າຕ່າງປະເທດລາວ ໄດ້ຮັບການສ້າງຕັ້ງຂຶ້ນພາຍໃຕ້ໃບອະນຸຍາດສ້າງຕັ້ງທະນາຄານ ເລກທີ 129/ທຫລ, ລົງວັນທີ 01 ພະຈິກ 1989, ໃນວັນທີ 23 ທັນວາ 2010 ທະນາຄານໄດ້ສຳເລັດການຂາຍຮຸ້ນອອກສູ່ມະຫາຊົນ. ທະນາຄານໄດ້ປ່ຽນຊື່ມາເປັນ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ອີງຕາມໃບທະບຽນວິສາຫະກິດ ເລກທີ 0061/ທຈທ, ລົງວັນທີ 10 ມັງກອນ 2011 ອອກໂດຍກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ, ກະຊວງອຸດສາຫະກຳ ແລະ ການຄ້າ ຂອງ ສປປ ລາວ. ໃນວັນທີດັ່ງກ່າວ, ລັດຖະບານ ເຊິ່ງຕາງໜ້າໂດຍກະຊວງການເງິນເປັນຜູ້ຖືຮຸ້ນໃຫຍ່ສຸດ ໂດຍຖືຮຸ້ນ 80% ຂອງຮຸ້ນທັງໝົດ.

ວັນທີ 15 ກໍລະກົດ 2011, ກະຊວງການເງິນ ຂາຍຮຸ້ນສາມັນ 10% (ເທົ່າກັບ 13.657.759 ຮຸ້ນ) ໃຫ້ຄູ່ຮ່ວມຮຸ້ນທາງຍຸດທະສາດ ຊື່ວ່າ ທະນາຄານ COFIBRED ອີງຕາມສັນຍາການຊື້-ຂາຍຮຸ້ນສາມັນ ລະຫວ່າງ ກະຊວງການເງິນ ແລະ ທະນາຄານ COFIBRED.

ໃນວັນທີ 17 ສິງຫາ 2017 ທຄຕລ ໄດ້ສະເໜີຂາຍຮຸ້ນໃຫ້ແກ່ຜູ້ຖືຮຸ້ນເດີມ ແລະ ຂາຮຸ້ນໃໝ່ ເພື່ອເພີ່ມທຶນຈົດທະບຽນ. ທະນາຄານໄດ້ຮັບຂໍ້ຕົກລົງສະບັບໃໝ່ ເລກທີ 21/ທຫລ, ລົງວັນທີ 13 ກັນຍາ 2017 ອອກໂດຍທະນາຄານແຫ່ງ ສປປ ລາວ. ໃນວັນທີ 15 ກັນຍາ 2017 ຕະຫຼາດຫຼັກຊັບລາວໄດ້ຢັ້ງຢືນວ່າທະນາຄານໄດ້ເພີ່ມທຶນຈົດທະບຽນຈຳນວນ 355.728.500.000 ກີບ (ເທົ່າກັບ 71.145.700 ຮຸ້ນ) ຕາມໃບຢັ້ງຢືນເລກທີ 01/ຕລຊລ, ລົງວັນທີ 15 ກັນຍາ 2017 ແລະ ໃບທະບຽນວິສາຫະກິດສະບັບປັບປຸງໃຫມ່ ເລກທີ 0429/ທຈທ, ລົງວັນທີ 18 ພຶດສະພາ 2018 ອອກໂດຍ ກະຊວງອຸດສາຫະກຳ ແລະ ການຄ້າ.

ໃນວັນທີ 11 ຕຸລາ 2019 ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບໄດ້ອະນຸມັດໃຫ້ທະນາຄານປັບປຸງໂຄງສ້າງຜູ້ຖືຮຸ້ນໂດຍການສະເໜີຂາຍສິດຊື້ຮຸ້ນໃຫ້ແກ່ຜູ້ຖືຮຸ້ນເດີມ ແລະ ສາທາລະນະຊົນ. ຈຸດປະສົງຂອງການແບ່ງຮຸ້ນຂາຍຂອງລັດຖະບານ ແມ່ນເພື່ອສະໜັບສະໜູນສະເໜີຂາຍໃຫ້ແກ່ຜູ້ຖືຮຸ້ນທີ່ຫຼາກຫຼາຍ ເພື່ອພັດທະນາທະນາຄານໃຫ້ເຕີບໃຫຍ່ຂະຫຍາຍຕົວ ແລະ ໝັ້ນຄົງ. ພ້ອມດຽວກັນນັ້ນໃນວັນທີ 29 ພະຈິກ 2019 ສຳນັກງານຄະນະກຳ

ມະການຄຸ້ມຄອງຫຼັກຊັບໄດ້ຢັ້ງຢືນວ່າ ທະນາຄານໄດ້ສຳເລັດການສະເໜີຂາຍຮຸ້ນໃນອັດຕາສ່ວນ 10% ຂອງທະນາຄານໄດ້ສຳເລັດ.

ປະຈຸບັນ ໂຄງສ້າງການຖືຮຸ້ນຂອງທະນາຄານ: ລັດຖະບານຖືຮຸ້ນ 60%, ນັກລົງທຶນພາຍໃນ (ລວມທັງພະນັກງານ ທຄຕລ) ແລະ ນັກລົງທຶນຕ່າງປະເທດ 30% ແລະ ຄູ່ຮ່ວມຮຸ້ນທາງຍຸດທະສາດ 10%.

ກິດຈະກຳຫລັກຂອງທະນາຄານ ແມ່ນເພື່ອສະໜອງການບໍລິການ ລວມທັງການລະດົມທຶນ ແລະ ຮັບຝາກເງິນໄລຍະສັ້ນ, ກາງ ແລະ ຍາວ ຈາກນິຕິບຸກຄົນ ແລະ ບຸກຄົນ; ສະໜອງເງິນກູ້ໄລຍະສັ້ນ, ກາງ, ຍາວ ໃຫ້ແກ່ຫົວໜ່ວຍທຸລະກິດ ແລະ ບຸກຄົນຕາມຈຸດປະສົງ ແລະ ຄວາມສາມາດໃນການສະໜອງທຶນຂອງທະນາຄານ; ບໍລິການແລກປ່ຽນເງິນຕາຕ່າງປະເທດ, ບໍລິການຊຳລະສະສາງ, ບໍລິການການຄ້າລະຫວ່າງປະເທດ, ບໍລິການໜັງສືສິນເຊື່ອ, ຄ້ຳປະກັນ, ໃຫ້ບໍລິການຊື້ຂາຍວັດຖຸມີຄ່າອື່ນໆ ແລະ ໃຫ້ບໍລິການດ້ານທະນາຄານອື່ນໆ ທີ່ໄດ້ຮັບອະນຸຍາດຈາກທະນາຄານແຫ່ງ ສປປ ລາວ ໂດຍສະເພາະແມ່ນບໍລິການດ້ານປະກັນໄພ, ບໍລິການເປັນນາຍໜ້າຊື້ຂາຍຫຼັກຊັບເປັນຕົ້ນ.

**ທຶນຈົດທະບຽນ**

ທຶນຈົດທະບຽນ ນະວັນທີ 30 ມິຖຸນາ 2023 ແມ່ນ 1.038.617 ລ້ານກີບ (ວັນທີ 31 ທັນວາ 2022: 1.038.617 ລ້ານກີບ).

## IV. ໂຄງຮ່າງການຈັດຕັ້ງສະພາບໍລິຫານ, ຄະນະອຳນວຍການ ແລະ ການເຄື່ອນໄຫວຂອງຄະນະກຳມະການຂຶ້ນກັບສະພາບໍລິຫານ

### 1. ໂຄງຮ່າງການຈັດຕັ້ງ ແລະ ປະຫວັດໂດຍຫຍໍ້ ຂອງສະມາຊິກສະພາບໍລິຫານ

#### 1.1 ສະພາບໍລິຫານ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ:

ສະມາຊິກສະພາບໍລິຫານ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ນະວັນທີ 30 ມິຖຸນາ 2023 ປະກອບ ມີ 9 ທ່ານ:

| ຊື່ ແລະ ນາມສະກຸນ | ຕຳແໜ່ງ | ວັນທີແຕ່ງຕັ້ງ |
|---|---|---|
| ທ່ານ ບຸນປອນ ວັນນະຈິດ | ປະທານສະພາບໍລິຫານ | ແຕ່ງຕັ້ງວັນທີ 27 ເມສາ 2023 |
| ທ່ານ ຄຳສຸກ ສູນດາລາ | ກຳມະການອິດສະຫຼະ, ຮອງປະທານ | ແຕ່ງຕັ້ງຄືນວັນທີ 29 ຕຸລາ 2021 |
| ທ່ານ ນ. ສາຍສະໝອນ ຈັນທະຈັກ | ກຳມະການ | ແຕ່ງຕັ້ງວັນທີ 22 ພະຈິກ 2022 |
| ທ່ານ Stephane Mangiavacca | ກຳມະການ | ແຕ່ງຕັ້ງວັນທີ 29 ພຶດສະພາ 2020 |
| ທ່ານ ປະສົມເພັດ ຄຳຕັນ | ກຳມະການ | ແຕ່ງຕັ້ງວັນທີ 03 ສິງຫາ 2021 |
| ທ່ານ ຣສ ທອງເພັດ ຈັນທະນິວົງ | ກຳມະການອິດສະຫຼະ | ແຕ່ງຕັ້ງວັນທີ 03 ສິງຫາ 2021 |
| ທ່ານ ນ. ລັດດາວັນ ຊົງວິໄລ | ກຳມະການອິດສະຫຼະ | ແຕ່ງຕັ້ງວັນທີ 03 ສິງຫາ 2021 |
| ທ່ານ ສອນໄຊ ສີລາເພັດ | ກຳມະການອິດສະຫຼະ | ແຕ່ງຕັ້ງວັນທີ 03 ສິງຫາ 2021 |
| ທ່ານ ວຽງສຸກ ຈຸນທະວົງ | ກຳມະການ | ແຕ່ງຕັ້ງວັນທີ 27 ເມສາ 2018 |

## 1.2. ປະຫວັດຫຍໍ້ຂອງສະພາບໍລິຫານ



### ທ່ານ ບຸນປອນ ອັນນະຈິດ
**ປະທານສະພາບໍລິຫານ**

**ຊີວະປະຫວັດຫຍໍ້:**

ວັນ ເດືອນ ປີເກີດ : 14/04/1959
ສັນຊາດ : ລາວ
ພາສາ : ອັງກິດ, ຫວຽດນາມ
ຕຳແໜ່ງ : ຮອງລັດຖະມົນຕີກະຊວງການເງິນ

**ປະຫວັດການສຶກສາ:**

2012: ປະລິນຍາໂທ ສາຂາ ການຄຸ້ມຄອງເສດຖະກິດ, ສະຖາບັນການເມືອງ-ການປົກຄອງແຫ່ງຊາດ.
2010: ປະລິນຍາຕີ ສາຂາ ການຄຸ້ມຄອງເສດຖະກິດ, ສະຖາບັນການເມືອງ-ການປົກຄອງແຫ່ງຊາດ.
1998: ຊັ້ນສູງ ສາຂາ ການຄຸ້ມຄອງເສດຖະກິດ, ສະຖາບັນການເມືອງ-ການປົກຄອງແຫ່ງຊາດ.

**ປະຫວັດການເຮັດວຽກ:**

02/04/2021 - ປັດຈຸບັນ: ຮອງລັດຖະມົນຕີກະຊວງການເງິນ
2016 - 2021: ຮອງປະທານອົງການກວດສອບແຫ່ງລັດ
2010 - 2016: ຮອງປະທານຄະນະປັບປຸງທຸລະກິດແຫ່ງຊາດ ຢູ່ຫ້ອງວ່າການລັດຖະບານ
2005 - 2010: ຮອງເຈົ້າແຂວງອຸດົມໄຊ
1999 - 2005: ຫົວໜ້າພະແນກການເງິນ ແຂວງອຸດົມໄຊ
1995 - 1998: ຮອງຫົວໜ້າພະແນກແຜນການ-ການຮ່ວມມື ແຂວງອຸດົມໄຊ
1989 - 1995: ຫົວໜ້າຫ້ອງການ ການເງິນເມືອງຮຸນ, ແຂວງອຸດົມໄຊ
1985 - 1988: ຮອງຫົວໜ້າຫ້ອງການເສດຖະກິດແຜນການ ແລະ ການເງິນເມືອງຮຸນ, ແຂວງອຸດົມໄຊ
1984 - 1985: ຫົວໜ້າຫ້ອງການສະຖິຕິແຜນການ ເມືອງຮຸນ, ແຂວງອຸດົມໄຊ
1981 - 1984: ພະນັກງານວິຊາການ ຢູ່ຫ້ອງການສະຖິຕິແຜນການ, ເມືອງ ຮຸນ, ແຂວງອຸດົມໄຊ
1976 - 1981: ເປັນທະຫານກອງພັນ 28 ແລະ ຫ້ອງການ 63



**ທ່ານ ຄໍາສຸກ ສູນດາລາ**
**ຮອງປະທານສະພາບໍລິຫານ**

**ຊີວະປະຫວັດຫຍໍ້:**

ວັນ ເດືອນ ປີເກີດ : 03/06/1945
ສັນຊາດ : ລາວ
ພາສາ : ລາວ, ອັງກິດ, ຝຣັ່ງ
ຕໍາແໜ່ງ : ກໍາມະການອິດສະຫຼະ

**ປະຫວັດການສຶກສາ:**

1993 : ມະຫາວິທະຍາໄລຈອດສ໌ທາວທີ່ນະຄອນວໍຊິງຕັນປະເທດສະຫະລັດອາເມລິກາ;
1985 : ສະຖາບັນຄຸ້ມຄອງທະນາຄານແຫ່ງອິນເດຍທີ່ເມືອງປູເນ ປະເທດອິນເດຍ;
1974 : ສູນຝຶກອົບຮົມລະຫວ່າງປະເທດ ທີ່ ເມືອງ ນາໂກຢາປະເທດຍີ່ປຸ່ນ;
1972 : ການຝຶກອົບຮົມ: ດ້ານເສດຖະສາດ ຈາກສະຖາບັນຄຸ້ມຄອງເສດຖະກິດ ຂອງອົງການສະຫະປະຊາຊາດ ທີ່ບາງກອກປະເທດໄທ;
1969 : ຈົບອຸດົມ ແລະ ລະດັບປະລິນຍາຕຣີ ຈາກປະເທດ ອິດສະຕາລີ, ມະຫາວິທະຍາໄລນິວຊາວເວວ.

**ປະຫວັດການເຮັດວຽກ:**

2015 : ເປັນທີ່ປຶກສາດ້ານການເງິນ ແລະ ການທະນາຄານ ຂອງບໍລິສັດລ້ານຊ້າງ ມິເນີໂຣນ ຈໍາກັດ (ຊຶ່ງເປັນ ບໍລິສັດໃນເຄືອຂອງກຸ່ມບໍລິສັດໂອເຊຍນາ ແຫ່ງເມືອງ ເມວເບີນ ປະເທດອົດສະຕາລີ);
1995 –1996 : ເປັນທີ່ປຶກສາຜູ້ອໍານວຍການ ທີ່ອົງການ ການເງິນລະຫວ່າງປະເທດ ກຸ່ມພາກພື້ນ ອາຊີຕາເວັນອອກສ່ຽງໃຕ້, ທີ່ນະຄອນວໍຊິງຕັນ ປະເທດອາເມລິກາ;
1990 –1994 ແລະ 1997-2005 : ທະນາຄານແຫ່ງ ສປປ ລາວ;
1976 –1989 : ຢູ່ທະນາຄານການຄ້າຕ່າງປະເທດລາວ;
1970 –1975 : ຢູ່ທະນາຄານພັດທະນາລາວ.



## ທ່ານ ນາງ ສາຍສະໝອນ ຈັນທະຈັກ
**ກຳມະການ**

**ຊີວະປະຫວັດຫຍໍ້:**

ວັນ ເດືອນ ປີເກີດ : 15/03/1969

ສັນຊາດ : ລາວ

ພາສາ : ລາວ, ອັງກິດ

ຕຳແໜ່ງ : ຜູ້ອຳນວຍການ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ.

**ປະຫວັດການສຶກສາ:**

ທິດສະດີການເມືອງ: ຊັ້ນສູງ.

2007 : ປະລິນຍາໂທ ສາຂາ ບໍລິຫານທຸລະກິດຕ່າງປະເທດ ຈາກປະເທດ ອົດສະຕາລີ (Flinders University, Australia);

1998 : ປະລິນຍາໂທ ສາຂາ ບໍລິຫານລັດ ຈາກປະເທດ ຍີ່ປຸ່ນ (Saitama University, Japan);

1993 : ປະລິນຍາໂທ ສາຂາ ເສດຖະກິດມະຫາພາກ ຈາກມະຫາວິທະຍາໄລ ກູບານ ປະເທດ ລັດເຊຍ (Kuban State University, Russia).

**ປະຫວັດການເຮັດວຽກ:**

08/2022 – ປັດຈຸບັນ : ຜູ້ອຳນວຍການ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ;

09/2021 – 08/2022 : ຜູ້ອຳນວຍການໃຫຍ່, ຕະຫລາດຫລັກຊັບລາວ;

2015: ຫົວໜ້າສຳນັກງານ ຄະນະກຳມະການຄຸ້ມຄອງຫລັກຊັບ, ທະນາຄານ ແຫ່ງ ສປປ ລາວ;

04/2010 : ຮອງຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫລັກຊັບ, ທະນາຄານ ແຫ່ງ ສປປ ລາວ;

2009 : ຮອງຫົວໜ້າກົມນະໂຍບາຍເງິນຕາ, ທະນາຄານ ແຫ່ງ ສປປ ລາວ;

1993 – 1997 : ພະນັກງານກົມນະໂຍບາຍເງິນຕາ, ທະນາຄານ ແຫ່ງ ສປປ ລາວ.



**ທ່ານ Stephane MANGIAVACCA**
**ກຳມະການ**

**ຊີວະປະຫວັດຫຍໍ້:**
ວັນ ເດືອນ ປີເກີດ: : 11/07/1975
ສັນຊາດ : ຝຣັ່ງ
ພາສາ : ຝຣັ່ງ, ອັງກິດ, ສະເປນ, ຈີນ ແລະ ຍີ່ປຸ່ນ

**ປະຫວັດການສຶກສາ:**

1996 – 1999 : ສຶກສາທີ່ມະຫາວິທະຍາໄລ Ecole Nationale Superieure des Mines de Saint-Etienne.

- ຈົບຊັ້ນສູງສາຂາ ວິສະວະກຳສາດ ດ້ວຍກຽດນິຍົມ;
- ເຂົ້າຮ່ວມໂຄງການແລກປ່ຽນກ່ຽວກັບວິສະວະກຳສິ່ງແວດລ້ອມ ທີ່ University of New Brunswick, ປະເທດ Canada;
- ຫລັກສູດປະລິນຍາຕຣີເສດຖະສາດ.

**ປະຫວັດການເຮັດວຽກ:**

01/2020 – ປະຈຸບັນ : ຫົວໜ້າຝ່າຍທຸລະກິດຕ່າງປະເທດ, BRED Banque Populaire, ປະເທດ France;

2009 – 2010: ຫົວໜ້າຝ່າຍຄຸ້ມຄອງຄວາມສ່ຽງ ແລະ ການປະຕິບັດຕາມ, BRED Banque Populaire, ປະເທດ France;

2001 – 2009 : ຜູ້ຈັດການອາວຸດໂສຝ່າຍກວດສອບ ທີ່ Central Audit, Banque Populaire - Natixis - Coface (BPCE GROUP);

1999 – 2001 : ຜູ້ຊ່ວຍວຽກກ່ຽວກັບການຄ້າ ທີ່ French Trade Commission, Guangzhou, China;

1999 : ພະນັກງານຝຶກຫັດທີ່ EDF, French Company of Electricity, Lyon, France;

1998 : ພະນັກງານຝຶກຫັດທີ່ The Yokohama Rubber Company, Hiratsuka, Japan;

1997 : ພະນັກງານຝຶກຫັດທີ່ Pechiney-Aluminium, lssoire, France.



**ທ່ານ ປະສົມເພັດ ຄໍາຕັນ**

**ກໍາມະການ**

**ຊີວະປະຫວັດຫຍໍ້:**

ວັນ ເດືອນ ປີເກີດ : 25/05/1970

ສັນຊາດ : ລາວ

ພາສາ : ລາວ, ອັງກິດ

ຕໍາແໜ່ງ : ຮອງຫົວໜ້າກົມ, ກົມປະຕິຮູບລັດວິສາຫະກິດ ແລະ ການປະກັນໄພ, ກະຊວງການເງິນ

## ປະຫວັດການສຶກສາ:

2001 – 2003 : ປະລິນຍາໂທເສດຖະກິດ-ທຸລະກິດ ທີ່ວິທະຍາໄລກຸງຮີ, ປະເທດ ສ ເກົາຫຼີ;

1987 – 1993 : ປະລິນຍາຕີຄຸ້ມຄອງກົນຈັກ ທີ່ມະຫາວິທະຍາໄລຊັບພະວິຊາ 2 ທັນວາ ສປປ ລາວ.

## ປະຫວັດການເຮັດວຽກ:

08/2020 – ປະຈຸບັນ : ຮອງຫົວໜ້າກົມປະຕິຮູບລັດວິສາຫະກິດ ແລະ ການປະກັນໄພ, ກະຊວງການເງິນ;

2016 – 2020 : ຮອງຫົວໜ້າກົມນະໂຍບາຍການເງິນ ແລະ ນິຕິກໍາ, ກະຊວງການເງິນ;

2013 – 2016 : ຫົວໜ້າພະແນກຄຸ້ມຄອງທຶນກູ້ຢືມ ແລະ ຊ່ວຍເຫຼືອຫຼ້າ, ກົມການເງິນຕ່າງປະເທດ, ກະຊວງການເງິນ;

2008 – 2013 : ຫົວໜ້າຄຸ້ມຄອງໂຄງການກູ້ຢືມ ແລະ ຊ່ວຍເຫຼືອຫຼ້າ ຈາກທະນາຄານໂລກ ກະຊວງການເງິນ;

2007 – 2008 : ຮອງຫົວໜ້າພະແນກສະຖິຕິການເງິນ, ກົມນະໂຍບາຍການເງິນ,ກະຊວງການເງິນ;

1998 – 2007 : ວິຊາການກົມງົບປະມານ, ກະຊວງການເງິນ;

1994 – 1998 : ວິຊາການກົມເງິນຕາຕ່າງປະເທດ, ກະຊວງການເງິນ.



**ທ່ານ ທອງເພັດ ຈັນທະນິວົງ**
**ກຳມະການອິດສະຫຼະ**

**ຊີວະປະຫວັດຫຍໍ້:**
ວັນ ເດືອນ ປີເກີດ : 20/04/1962
ສັນຊາດ : ລາວ
ພາສາ : ລາວ, ອັງກິດ
ຕຳແໜ່ງ : ຮອງຄະນະບໍດີ ຄະນະເສດຖະສາດ ແລະ ບໍລິຫານທຸລະກິດ, ມະຫາວິທະຍາໄລແຫ່ງຊາດ.

2018 – 2021 : ຄົ້ນຄວ້າປະລິນຍາເອກ ດ້ານການບັນຊີ (PhD Candidate) ຢູ່ມະຫາວິທະຍາໄລສີປະທຸມ ປະເທດໄທ;
2019 : ໄດ້ຮັບປະກາດສະນີຍະບັດ ນັກຊ່ຽວຊານບັນຊີລາວ;
1998 – 2002 : ຄົ້ນຄວ້າປະລິນຍາໂທ ດ້ານການພືວພັນສາກົນ ຢູ່ມະຫາວິທະຍາໄລ De Mons ປະເທດແບນຊິກ;
1998 – 2000 : ຄົ້ນຄວ້າປະລິນຍາໂທ ດ້ານບໍລິຫານທຸລະກິດ ຢູ່ມະຫາວິທະຍາໄລເທັກໂນໂລຢີແຫ່ງເອເຊັຍ (AIT) ປະເທດໄທ;
1996 – 1997 : ສຶກສາລະດັບປະລິນຍາຕີ ດ້ານບໍລິຫານທຸລະກິດ ໂຄງການຮ່ວມມືສະຖາບັນການເມືອງການປົກຄອງແຫ່ງຊາດ ແລະ ມະຫາວິທະຍາໄລເທັກໂນໂລຢີແຫ່ງເອເຊັຍ (AIT) ປະເທດໄທ;
1981 – 1985 : ສຶກສາລະດັບປະລິນຍາຕີ ດ້ານຄະນິດສາດ ຢູ່ມະຫາວິທະຍາໄລແຫ່ງຊາດ.

## ປະຫວັດການເຮັດວຽກ:

- ເປັນຮອງຄະນະບໍດີ ຄະນະເສດຖະສາດ ແລະ ບໍລິຫານທຸລະກິດ (ຮັບຜິດຊອບຫຼັກສູດປະລິນຍາໂທ ແລະ ປະລິນຍາເອກ), ມະຫາວິທະຍາໄລແຫ່ງຊາດ;
- ເປັນຮອງສາດສະດາຈານ ສາຂາບໍລິຫານທຸລະກິດ (ເລກທີ 304-178/ນຍ ລົງວັນທີ 04/09/2006);
- ເປັນປະທານຄະນະກຳມະທິການຫຼັກສູດ ການບັນຊີ ແລະ ການກວດສອບ (CPA) ຂອງສະພາວິຊາຊີບນັກບັນຊີ ແລະ ນັກກວດສອບລາວ;
- ເປັນຄະນະບໍລິຫານງານສະພາວິຊາຊີບນັກບັນຊີ ແລະ ນັກກວດສອບລາວ;
- ເປັນກຳມະການອິດສະຫຼະຂອງສະພາບໍລິຫານ ລັດວິສາຫະກິດ ລາວໂທລະຄົມ;
- ເປັນຄະນະຄົ້ນຄວ້າ ແລະ ປັບປຸງລະບົບບັນຊີວິສາຫະກິດ, ຮູບແບບເອກະສານການລາຍງານການເງິນ, ການກຳນົດຜັງບັນຊີ ແລະ ເທັກນິກການບັນທຶກບັນຊີວິສາຫະກິດ (ກະຊວງການເງິນ);
- ເປັນອາຈານສອນຫຼັກສູດ ປະລິນຍາຕີນາໆຊາດ ແລະ ປະລິນຍາໂທ ສາຂາບໍລິຫານທຸລະກິດ, ການບັນຊີ, ການເງິນ ແລະ ການທະນາຄານ, ເສດຖະສາດ ຂອງ ມະຫາວິທະຍາໄລ ແຫ່ງຊາດ;
- ເປັນອາຈານຮັບເຊີນຫຼັກສູດ MBA ມະຫາວິທະຍາໄລຂອນແກນ, ປະເທດໄທ;
- ເປັນຄູຝຶກ ມາດຕະຖານບັນຊີສາກົນ (IFRS) ແລະ ມາດຖານການກວດສອບສາກົນ (AIS).



**ທ່ານ ນ. ລັດດາວັນ ຊີງອີໄລ**
**ກຳມະການອິດສະຫຼະ**

**ຊີວະປະຫວັດຫຍໍ້:**
ວັນ ເດືອນ ປີເກີດ : 27/04/1982
ສັນຊາດ : ລາວ
ພາສາ : ລາວ, ອັງກິດ
ຕຳແໜ່ງ : ອຳນວຍການຫົວໜ້າສະຖາບັນຄົ້ນຄວ້າເສດຖະກິດມະຫາພາກ, ສະຖາບັນວິທະຍາສາດເສດຖະກິດ ແລະ ສັງຄົມແຫ່ງຊາດ.

2008 – 2009 : ຄົ້ນຄວ້າປະລິນຍາໂທ ດ້ານນະໂຍບາຍບໍລິຫານພາກລັດ ຢູ່ສະຖາບັນ GRIPS, ປະເທດຍີ່ປຸ່ນ;
2000 – 2005 : ສຶກສາລະດັບປະລິນຍາຕີ ດ້ານເສດຖະສາດ ຄະນະເສດຖະສາດ ແລະ ບໍລິຫານທຸລະກິດ, ມະຫາວິທະຍາໄລແຫ່ງຊາດ;
2004 : ນັກສຶກສາແລກປ່ຽນມະຫາວິທະຍາໄລແຫ່ງຊາດສິງກະໂປ, ປະເທດສິງກະໂປ.

## ປະຫວັດການເຮັດວຽກ:

2020 – ປັດຈຸບັນ : ອຳນວຍການຫົວໜ້າສະຖາບັນຄົ້ນຄວ້າເສດຖະກິດມະຫາພາກ, ສະຖາບັນວິທະຍາສາດເສດຖະກິດ ແລະ ສັງຄົມແຫ່ງຊາດ;
2019 – 2020 : ຮັກສາການຫົວໜ້າສູນຄົ້ນຄວ້ານະໂຍບາຍເສດຖະກິດມະຫາພາກ ແລະ ປັບປຸງໂຄງສ້າງເສດຖະກິດ, ສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ;
2016 – 2019 : ຮອງຫົວໜ້າສູນຄົ້ນຄວ້ານະໂຍບາຍເສດຖະກິດມະຫາພາກ ແລະ ປັບປຸງໂຄງສ້າງເສດຖະກິດ, ສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ;
2015 – 2016 : ຫົວໜ້າພະແນກຢູ່ສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ, ກະຊວງແຜນການ ແລະ ການລົງທຶນ;
2011 – 2015 : ຮອງຫົວໜ້າພະແນກຢູ່ສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ, ກະຊວງແຜນການ ແລະ ການລົງທຶນ;
2005 – 2011 : ຜູ້ຊ່ວຍນັກຄົ້ນຄວ້າ ຢູ່ສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ, ກະຊວງແຜນການ ແລະ ການລົງທຶນ.



**ທ່ານ ສອນໄຊ ສີລາເພັດ**
**ກຳມະການອິດສະຫຼະ**

**ຊີວະປະຫວັດຫຍໍ້:**
ວັນ ເດືອນ ປີເກີດ : 01/01/1977
ສັນຊາດ : ລາວ
ພາສາ : ລາວ, ອັງກິດ
ຕຳແໜ່ງ : ປະທານ ສະພາວິຊາຊີບ ນັກບັນຊີ ແລະ ນັກກວດສອບ

**ປະຫວັດການສຶກສາ:**

2017 – 2021 : ສຶກສາ ແລະ ຄົ້ນຄວ້າປະລິນຍາເອກ ດ້ານການບັນຊີ (PhD Candidate) ມະຫາວິທະຍາໄລ ສີປະທຸມ, ປະເທດໄທ;
2013 – 2014 : ສຶກສາ ແລະ ຄົ້ນຄວ້າປະລິນຍາໂທ ດ້ານການເງິນ ຢູ່ວິທະຍາໄລເທັກໂນໂລຢີສັນຕະພິນ, ປະເທດໄທ;
1995 – 2000 : ສຶກສາລະດັບປະລິນຍາຕີ ດ້ານບໍລິຫານທຸລະກິດ ວິທະຍາໄລຄອມເຊັນເຕີ;
1995 – 1998 : ສຶກສາລະດັບຊັ້ນສູງ ດ້ານການບັນຊີ ຢູ່ວິທະຍາໄລປາກປ່າສັກ;
06/2016 : ເປັນສະມາຊິກຂອງ CPA ອົດສະຕາລີ;
2018 : ເປັນສະມາຊິກຂອງ CPA ລາວ;
1999 – 2000 : ເປັນສະມາຊິກຂອງ Lao Institute of Chartered Public Accountants (LICPA).

**ປະຫວັດການເຮັດວຽກ:**

05/2022 – ປັດຈຸບັນ : ເປັນປະທານ Lao Chamber of Professional Accountants and Auditor (LCPAA);
2015 – 05/2022 : ເປັນຮອງປະທານ Lao Chamber of Professional Accountants and Auditor (LCPAA);
01/2016 – 12/2017 : ເປັນປະທານ ASEAN Federation of Accountants (AFA);
01/2014 – 12/2015 : ຮອງເປັນປະທານ ASEAN Federation of Accountants (AFA);
07/2011 – 09/2014 : ເປັນຜູ້ອຳນວຍການ Ernst & Young Lao Limited;
07/2008 – 06/2011 : ເປັນຜູ້ຈັດການອາວຸໂສຝ່າຍກວດສອບ Ernst & Young Lao Limited;
08/2007 – 06/2008 : ເປັນຜູ້ຈັດການຝ່າຍກວດສອບ Ernst & Young Lao Limited;
05/2004 – 08/2007 : ເປັນຜູ້ຈັດການຝ່າຍກວດສອບ PricewaterhouseCoopers (Lao) Ltd;
2002 – 05/2004 : ເປັນພະນັກງານກວດສອບອາວຸໂສປະສົບການ PricewaterhouseCoopers (Lao) Ltd;
2000 – 2001 : ເປັນພະນັກງານກວດສອບອາວຸໂສ PricewaterhouseCoopers (Lao) Ltd;
1998 – 1999 : ເປັນພະນັກງານຜູ້ຊ່ວຍກວດສອບ PricewaterhouseCoopers (Lao) Ltd.



**ທ່ານ ວຽງສຸກ ຈຸນທະວົງ**
**ກຳມະການ**

**ຊີວະປະຫວັດຫຍໍ້:**

ວັນ ເດືອນ ປີເກີດ : 15/08/1964

ສັນຊາດ : ລາວ

ພາສາ : ລາວ, ອັງກິດ ແລະ ເຊັກໂກ

ຕຳແໜ່ງ : ຮອງຜູ້ອຳນວຍການ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ.

**ປະຫວັດການສຶກສາ:**

2017 : ບຳລຸງທິດສະດີການເມືອງ 45 ວັນ ຈາກໂຮງຮຽນ ການເມືອງ - ການປົກຄອງ;

1982 – 1989 : ປະລິນຍາໂທ ສາຂາເສດຖະກິດການຄ້າ ຈາກສາທາລະນະລັດເຊັກ.

**ປະສົບການການເຮັດວຽກ:**

2019 – ປະຈຸບັນ : ເປັນຮອງຜູ້ອຳນວຍການ ທະນາຄານການຄ້າຕ່າງ ປະເທດລາວ ມະຫາຊົນ;

2015 – 2019 : ເປັນຫົວໜ້າພະແນກຄຸ້ມຄອງສິນເຊື່ອ ແລະ ເປັນກຳມະການສະພາບໍລິຫານບໍລິສັດ ຫລັກຊັບ ທຄຕລ-ກທ (BCEL-KT);

2013 – 2015 : ຫົວໜ້າ ທຄຕລ ສາຂາຈຳປາສັກ;

2011 – 2013 : ຫົວໜ້າ ທຄຕລ ສາຂາສາລະວັນ;

2010 – 2011 : ວ່າການຫົວໜ້າ ທຄຕລ ສາຂາສາລະວັນ;

2007 – 2010 : ວ່າການຫົວໜ້າ ທຄຕລ ສາຂາຈຳປາສັກ;

2005 – 2007 : ວ່າການຮອງຫົວໜ້າສາຂາຈຳປາສັກ;

2003 – 2005 : ຫົວໜ້າຂະແໜງສິນເຊື່ອ ສາຂາຈຳປາສັກ;

2001 – 2002 : ຫົວໜ້າໜ່ວຍງານບໍລິການ ສາຂາຈຳປາສັກ;

1996 – 2000 : ພະນັກງານວິຊາການສິນເຊື່ອ ທຄຕລ ສາຂາຈຳປາສັກ.

## 2. ໂຄງຮ່າງການຈັດຕັ້ງ ແລະ ປະຫວັດໂດຍຫຍໍ້ ຂອງຄະນະອຳນວຍການ

### 2.1 ຄະນະອຳນວຍການ:

ຄະນະອຳນວຍການ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ນະວັນທີ 30 ມິຖຸນາ 2023 ປະກອບມີ 6 ທ່ານ:

| ຊື່ ແລະ ນາມສະກຸນ | ຕຳແໜ່ງ | ວັນທີແຕ່ງຕັ້ງ |
|---|---|---|
| ທ່ານ ນ. ສາຍສະໝອນ ຈັນທະຈັກ | ຜູ້ອຳນວຍການ | ແຕ່ງຕັ້ງວັນທີ 01 ສິງຫາ 2022 |
| ທ່ານ ນັນທະລາດ ແກ້ວປະເສີດ | ຮອງຜູ້ອຳນວຍການ | ແຕ່ງຕັ້ງວັນທີ 30 ກັນຍາ 2014 |
| ທ່ານ ກິງສັກ ສຸພອນສີ | ຮອງຜູ້ອຳນວຍການ | ແຕ່ງຕັ້ງວັນທີ 01 ພຶດສະພາ 2021 |
| ທ່ານ ວຽງສຸກ ຈຸນທະວົງ | ຮອງຜູ້ອຳນວຍການ | ແຕ່ງຕັ້ງວັນທີ 18 ກຸມພາ 2019 |
| ທ່ານ ນ. ບົວໄພວັນ ນັນດາວົງ | ຮອງຜູ້ອຳນວຍການ | ແຕ່ງຕັ້ງວັນທີ 01 ພຶດສະພາ 2021 |
| ທ່ານ ສາຍຈິດ ສີມມະວົງ | ຮອງຜູ້ອຳນວຍການ | ແຕ່ງຕັ້ງວັນທີ 01 ພຶດສະພາ 2021 |

### 2.2 ປະຫວັດຫຍໍ້ຂອງຄະນະອຳນວຍການ:



**ທ່ານ ນາງ ສາຍສະໝອນ ຈັນທະຈັກ**

**ຜູ້ອຳນວຍການ**

**ຊີວະປະຫວັດຫຍໍ້:**

ວັນ ເດືອນ ປີເກີດ : 15/03/1969

ສັນຊາດ : ລາວ

ພາສາ : ລາວ, ອັງກິດ

ຕຳແໜ່ງ : ຜູ້ອຳນວຍການ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ.

**ປະຫວັດການສຶກສາ:**

ທິດສະດີການເມືອງ: ຊັ້ນສູງ.

2007 : ປະລິນຍາໂທ ສາຂາ ບໍລິຫານທຸລະກິດຕ່າງປະເທດ ຈາກປະເທດ ອົດສະຕາລີ (Flinders University, Australia);

1998 : ປະລິນຍາໂທ ສາຂາ ບໍລິຫານລັດ ຈາກປະເທດ ຍີ່ປຸ່ນ (Saitama University, Japan);

1993 : ປະລິນຍາໂທ ສາຂາ ເສດຖະກິດມະຫາພາກ ຈາກມະຫາວິທະຍາໄລ ກູບານ ປະເທດ ລັດເຊຍ (Kuban State University, Russia).

**ປະຫວັດການເຮັດວຽກ:**

08/2022 – ປັດຈຸບັນ : ຜູ້ອຳນວຍການ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ;

09/2021 – 08/2022 : ຜູ້ອຳນວຍການໃຫຍ່, ຕະຫລາດຫລັກຊັບລາວ;

2015: ຫົວໜ້າສຳນັກງານ ຄະນະກຳມະການຄຸ້ມຄອງຫລັກຊັບ, ທະນາຄານ ແຫ່ງ ສປປ ລາວ;

04/2010 : ຮອງຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫລັກຊັບ, ທະນາຄານ ແຫ່ງ ສປປ ລາວ;

2009 : ຮອງຫົວໜ້າກົມນະໂຍບາຍເງິນຕາ, ທະນາຄານ ແຫ່ງ ສປປ ລາວ;

1993 – 1997 : ພະນັກງານກົມນະໂຍບາຍເງິນຕາ, ທະນາຄານ ແຫ່ງ ສປປ ລາວ.



**ທ່ານ ມັນທະລາດ ແກ້ວປະເສີດ**
**ຮອງຜູ້ອຳນວຍການ**

**ຊີວະປະຫວັດຫຍໍ້:**
ວັນ ເດືອນ ປີເກີດ : 16/08/1978
ສັນຊາດ : ລາວ
ພາສາ : ລາວ, ອັງກິດ ແລະ ຈີນ.
ຕຳແໜ່ງ : ຮອງຜູ້ອຳນວຍການ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ.

**ປະຫວັດການສຶກສາ:**
2008 – 2010 : ຖືນຄວ້າປະລິນຍາໂທ ດ້ານນະໂຍບາຍການຄ້າສາກົນ ຢູ່ປະເທດອາເມລິກາ;
2005 – 2006 : ຊັ້ນສູງດ້ານການຄ້າລະຫວ່າງປະເທດ ທີ່ວິທະຍາໄລ ວິກຕໍເລຍ ປະເທດອົດສະຕາລີ;
2004 : ກຽມພາສາອັງກິດຢູ່ວິທະຍາໄລວຽງຈັນຄູ່ເລດ;
1996 – 2000 : ສຶກສາຢູ່ມະຫາວິທະຍາໄລແຫ່ງຊາດ ຄະນະວິຊາ ພາສາອັງກິດ.

**ປະຫວັດການເຮັດວຽກ:**
2014 – ປະຈຸບັນ : ເປັນຮອງຜູ້ອຳນວຍການ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ;
2012 – 2014 : ເປັນຫົວໜ້າສູນບໍລິການອີເລັກໂທຣນິກ ແລະ ຜະລິດຕະພັນບັດ;
2010 – 2012 : ເປັນຮັກສາການຫົວໜ້າສູນບໍລິການອີເລັກໂທຣນິກ ແລະ ຜະລິດຕະພັນບັດ;
2003 – 2007 : ເປັນວ່າການຮອງສູນບໍລິການອີເລັກໂທຣນິກ ແລະ ຜະລິດຕະພັນບັດ;
2001 – 2003 : ເປັນວິຊາການພະແນກເງິນໂອນຕ່າງປະເທດ;
2001 – 2001 : ເປັນພະນັກງານວິຊາການພະແນກບັນຊີ;
2000 – 2001 : ເປັນພະນັກງານວິຊາການພະແນກເງິນຝາກ ທຄຕລ ສຳນັກງານໃຫຍ່.



**ທ່ານ ກິງສັກ ສຸພອນສີ**
**ຮອງຜູ້ອຳນວຍການ**

**ຊີວະປະຫວັດຫຍໍ້:**
ວັນ ເດືອນ ປີເກີດ : 12/11/1977
ສັນຊາດ : ລາວ
ພາສາ : ລາວ, ອັງກິດ
ຕຳແໜ່ງ : ຮອງຜູ້ອຳນວຍການ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ.

**ປະຫວັດການສຶກສາ:**
2021 : ປະລິນຍາໂທ ບໍລິຫານການເງິນ ຈາກມະຫາວິທະຍາໄລແຫ່ງຊາດ;
2018 : ຊັ້ນອານຸປະລິນຍາ ທິດສະດີການເມືອງ-ການປົກຄອງ ຈາກໂຮງຮຽນການເມືອງ-ການປົກຄອງ ນະຄອນຫລວງວຽງຈັນ.

**ປະສົບການການເຮັດວຽກ:**
2021 – ປະຈຸບັນ : ເປັນຮອງຜູ້ອຳນວຍການ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ;
2018 – 2021 : ເປັນຫົວໜ້າພະແນກກວດກາພາຍໃນ ທຄຕລ ສຳນັກງານໃຫຍ່;
2016-2018 : ຮຽນທິດສະດີການເມືອງ-ການປົກຄອງ ຊັ້ນອານຸປະລິນຍາຢູ່ໂຮງຮຽນການເມືອງ - ການປົກຄອງ ນະຄອນຫລວງວຽງຈັນ;
2014 – 2016 : ເປັນຫົວໜ້າ ທຄຕລ ສາຂາ ຫຼວງນໍ້າທາ;
2013 – 2014 : ເປັນຫົວໜ້າ ທຄຕລ ສາຂາ ຫົວພັນ;
2010 – 2013 : ວ່າການຫົວໜ້າ ທຄຕລ ສາຂາ ຫົວພັນ;
2008 – 2010 : ຮອງຫົວໜ້າ ທຄຕລ ສາຂາ ອຸດົມໄຊ;
2007 – 2008 : ເປັນຫົວໜ້າຂະແໜງບໍລິການ ທຄຕລ ສາຂາ ອຸດົມໄຊ;
2005 – 2007 : ວ່າການຫົວຫນ້າຂະແໜງສິນເຊື່ອ ທຄຕລ ສາຂາ ອຸດົມໄຊ;
2001 – 2005 : ພະນັກງານວິຊາການຂະແໜງສິນເຊື່ອ ທຄຕລ ສາຂາ ອຸດົມໄຊ;
2000 – 2001 : ພະນັກງານວິຊາການຂະແໜງບໍລິການ ທຄຕລ ສາຂາ ອຸດົມໄຊ.



**ທ່ານ ວຽງສຸກ ຈຸນທະວົງ**
**ຮອງຜູ້ອຳນວຍການ**

**ຊີວະປະຫວັດຫຍໍ້:**

ວັນ ເດືອນ ປີເກີດ : 15/08/1964

ສັນຊາດ : ລາວ

ພາສາ : ລາວ, ອັງກິດ ແລະ ເຊັກໂກ

ຕໍາແໜ່ງ : ຮອງຜູ້ອໍານວຍການ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ.

**ປະຫວັດການສຶກສາ:**

2017 : ບໍາລຸງທິດສະດີການເມືອງ 45 ວັນ ຈາກໂຮງຮຽນ ການເມືອງ - ການປົກຄອງ;

1982 – 1989 : ປະລິນຍາໂທ ສາຂາເສດຖະກິດການຄ້າ ຈາກສາທາລະນະລັດເຊັກ.

**ປະສົບການການເຮັດວຽກ:**

2019 – ປະຈຸບັນ : ເປັນຮອງຜູ້ອໍານວຍການ ທະນາຄານການຄ້າຕ່າງ ປະເທດລາວ ມະຫາຊົນ;

2015 – 2019 : ເປັນຫົວໜ້າພະແນກຄຸ້ມຄອງສິນເຊື່ອ ແລະ ເປັນກໍາມະການສະພາບໍລິຫານບໍລິສັດ ຫລັກຊັບ ທຄຕລ-ກທ (BCEL-KT);

2013 – 2015 : ຫົວໜ້າ ທຄຕລ ສາຂາຈໍາປາສັກ;

2011 – 2013 : ຫົວໜ້າ ທຄຕລ ສາຂາສາລະວັນ;

2010 – 2011 : ວ່າການຫົວໜ້າ ທຄຕລ ສາຂາສາລະວັນ;

2007 – 2010 : ວ່າການຫົວໜ້າ ທຄຕລ ສາຂາຈໍາປາສັກ;

2005 – 2007 : ວ່າການຮອງຫົວໜ້າສາຂາຈໍາປາສັກ;

2003 – 2005 : ຫົວໜ້າຂະແໜງສິນເຊື່ອ ສາຂາຈໍາປາສັກ;

2001 – 2002 : ຫົວໜ້າໜ່ວຍງານບໍລິການ ສາຂາຈໍາປາສັກ;

1996 – 2000 : ພະນັກງານວິຊາການສິນເຊື່ອ ທຄຕລ ສາຂາຈໍາປາສັກ.



## ທ່ານ ນາງ ບົວໄພວັນ ມັນດາວົງ
**ຮອງຜູ້ອຳນວຍການ**

**ຊີວະປະຫວັດຫຍໍ້:**

ວັນ ເດືອນ ປີເກີດ : 26/11/1971

ສັນຊາດ : ລາວ

ພາສາ : ລາວ, ອັງກິດ

ຕຳແໜ່ງ : ຮອງຜູ້ອຳນວຍການ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ.

**ປະຫວັດການສຶກສາ:**

2014 : ປະລິນຍາໂທ ດ້ານຄຸ້ມຄອງເສດຖະກິດ ຢູ່ສະຖາບັນການເມືອງ-ການປົກຄອງແຫ່ງຊາດ.

**ປະສົບການການເຮັດວຽກ:**

2021 – ປະຈຸບັນ : ເປັນຮອງຜູ້ອຳນວຍການ ທະນາຄານການຄ້າຕ່າງ ປະເທດລາວ ມະຫາຊົນ;

1/1/2019 – 2021 : ເປັນຫົວໜ້າພະແນກຈັດຕັ້ງ-ພະນັກງານ ທຄຕລ ສຳນັກງານໃຫຍ່;

2018 – 2019 : ເປັນວ່າການຫົວໜ້າພະແນກຈັດຕັ້ງ-ພະນັກງານ ທຄຕລ ສຳນັກງານໃຫຍ່;

2015 – 2018 : ເປັນຮອງຫົວໜ້າພະແນກຈັດຕັ້ງ-ພະນັກງານ ທຄຕລ ສຳນັກງານໃຫຍ່;

2013 – 2015 : ເປັນຮອງຫົວໜ້າ ທຄຕລ ສາຂານະຄອນຫຼວງວຽງຈັນ;

2011 – 2013 : ເປັນຮອງຫົວໜ້າພະແນກຈັດຕັ້ງ-ພະນັກງານ ທຄຕລ ສຳນັກງານໃຫຍ່;

2009 – 2011 : ເປັນວ່າການຮອງຫົວໜ້າພະແນກຈັດຕັ້ງ-ພະນັກງານ ທຄຕລ ສຳນັກງານໃຫຍ່;

1997 – 2009 : ເປັນພະນັກງານວິຊາການພະແນກຈັດຕັ້ງ-ພະນັກງານ ທຄຕລ ສຳນັກງານໃຫຍ່;

1994 – 1997 : ເປັນພະນັກງານວິຊາການພະແນກຫ້ອງການບໍລິຫານ-ການເງິນ ທຄຕລ;

1993 – 1994 : ເປັນພະນັກງານວິຊາການໜ່ວຍບໍລິການຕະຫຼາດເຊົ້າ II ທຄຕລ.



**ທ່ານ ສາຍຈິດ ສິມມະວົງ**
**ຮອງຜູ້ອຳນວຍການ**

**ຊີວະປະຫວັດຫຍໍ້:**
ວັນ ເດືອນ ປີເກີດ : 11/02/1972
ສັນຊາດ : ລາວ
ພາສາ : ລາວ, ອັງກິດ ແລະ ຝຣັ່ງ
ຕຳແໜ່ງ : ຮອງຜູ້ອຳນວຍການ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ.

**ປະຫວັດການສຶກສາ:**
2014 : ປະລິນຍາໂທ ສາຂາຄຸ້ມຄອງເສດຖະກິດ ຈາກສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ.

**ປະສົບການການເຮັດວຽກ:**
2021 – ປະຈຸບັນ : ເປັນຮອງຜູ້ອຳນວຍການ ທະນາຄານການຄ້າຕ່າງ ປະເທດລາວ ມະຫາຊົນ;
08/01/2018 : ເປັນຫົວໜ້າພະແນກຫ້ອງການ-ບໍລິຫານການເງິນ ທຄຕລ;
2014 – 2018 : ວ່າການຫົວໜ້າພະແນກຫ້ອງການ-ບໍລິຫານການເງິນ ທຄຕລ;
2013 – 2014 : ຮອງຫົວໜ້າພະແນກຫ້ອງການ-ບໍລິຫານການເງິນ ທຄຕລ;
2010 – 2013 : ຫົວໜ້າຂະແໜງບໍລິຫານທົ່ວໄປ, ພະແນກຫ້ອງການ-ບໍລິຫານການເງິນ ທຄຕລ;
2007 – 2010 : ວ່າການຫົວໜ້າຂະແໜງບໍລິຫານທົ່ວໄປ, ພະແນກຫ້ອງການ-ບໍລິຫານການເງິນ ທຄຕລ;
2000 – 2006 : ຫົວໜ້າໜ່ວຍງານຮຽກເກັບແຊັກ, ພະແນກເງິນໂອນຕ່າງປະເທດ;
1999 – 2000 : ຫົວໜ້າຫ້ອງແລກປ່ຽນ ຮຸ້ນສ່ວນສີຫອມ, ສູນບໍລິການ;
1998 – 1999 : ຫົວໜ້າຫ້ອງແລກປ່ຽນຂົວມິດຕະພາບ, ສູນບໍລິການ;
1995 – 1998 : ພະນັກງານວິຊາການສູນບໍລິການ ທຄຕລ.

## 3. ການເຄື່ອນໄຫວຂອງສະພາບໍລິຫານ ແລະ ຄະນະກໍາມະການທີ່ຂຶ້ນກັບສະພາບໍລິຫານ

### 3.1 ກອງປະຊຸມສະພາບໍລິຫານ

ໃນໄລຍະ 6 ເດືອນຕົ້ນປີ 2023 ສະພາບໍລິຫານ ທຄຕລ ໄດ້ດໍາເນີນກອງປະຊຸມສະໄໝສາມັນ 1 ຄັ້ງ ແລະ ຮັບຮອງບາງບັນຫາຜ່ານຈົດໝາຍວຽນ ເຊິ່ງສາມາດສັງລວມໄດ້ດັ່ງນີ້:

- ຮັບຮອງເອກະສານລາຍງານການເງິນປີ 2022 ທີ່ຜ່ານການກວດສອບຈາກຜູ້ກວດສອບອິດສະຫຼະ ເພື່ອລາຍງານຕໍ່ກອງປະຊຸມຜູ້ຖືຮຸ້ນ;
- ກໍານົດມື້ປິດປຶ້ມທະບຽນຜູ້ຖືຮຸ້ນເພື່ອກໍານົດສິດຂອງຜູ້ເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນ ທຄຕລ ປະຈໍາປີ 2022;
- ຮັບຮອງມື້ປິດປຶ້ມທະບຽນຜູ້ຖືຮຸ້ນເພື່ອກໍານົດສິດຂອງຜູ້ຖືຮຸ້ນໃນການຮັບເງິນປັນຜົນ;
- ຮັບຮອງວາລະກອງປະຊຸມສາມັນຜູ້ຖືຮຸ້ນ ທຄຕລ ປະຈໍາປີ 2022;
- ຮັບຮອງການຈັດສັນກໍາໄລປະຈໍາປີ 2022 ເພື່ອນໍາສະເໜີກອງປະຊຸມຜູ້ຖືຮຸ້ນພິຈາລະນາຮັບຮອງ;
- ຮັບຮອງການແຕ່ງຕັ້ງປະທານສະພາບໍລິຫານ ເພື່ອນໍາສະເໜີກອງປະຊຸມຜູ້ຖືຮຸ້ນພິຈາລະນາຮັບຮອງ;
- ຮັບຮອງແຜນການປະຈໍາປີ 2023 ຂອງ ທຄຕລ ເພື່ອນໍາສະເໜີກອງປະຊຸມຜູ້ຖືຮຸ້ນພິຈາລະນາຮັບຮອງ;
- ຮັບຮອງຜູ້ກວດສອບອິດສະຫຼະ ປະຈໍາປີ 2023 ເພື່ອນໍາສະເໜີກອງປະຊຸມຜູ້ຖືຮຸ້ນພິຈາລະນາຮັບຮອງ;
- ຮັບຮອງການແຕ່ງຕັ້ງ, ສັບຊ້ອນ ຕໍາແໜ່ງງານຂັ້ນຫົວໜ້າພະແນກ, ສູນ ແລະ ສາຂາ ຈໍານວນໜຶ່ງ;
- ຮັບຮອງການສະເໜີຂໍກູ້ຢືມທີ່ຂຶ້ນກັບສິດພິຈາລະນາຂອງສະພາບໍລິຫານ ຈໍານວນໜຶ່ງ.

### 3.2 ຄະນະກໍາມະການຄຸ້ມຄອງຄວາມສ່ຽງ

ຄະນະກໍາມະການ ໄດ້ເອົາໃຈໃສ່ໃຫ້ຄໍາແນະນໍາໃນການຄົ້ນຄວ້າ ແລະ ກໍານົດບັນດາລະບຽບການ ແລະ ນະໂຍບາຍດ້ານການຄຸ້ມຄອງຄວາມສ່ຽງ ຂອງ ທຄຕລ, ພ້ອມທັງໄດ້ພິຈາລະນາຮັບຮອງເອົາບັນດານະໂຍບາຍ ແລະ ກົດລະບຽບທີ່ຕິດພັນກັບວຽກງານຄຸ້ມຄອງຄວາມສ່ຽງ ແລະ ຕິດຕາມບັນດາໂຄງການບາເຊວ 2 ທີ່ ທຄຕລ ໄດ້ດໍາເນີນມາແຕ່ປີ 2018. ຄະນະກໍາມະການໄດ້ເປີດກອງປະຊຸມຂອງຕົນຂຶ້ນຢ່າງເປັນປົກກະຕິຕາມຮອບວຽນທີ່ໄດ້ກໍານົດໄວ້ໃນລະບຽບ. ໃນໄລຍະ 6 ເດືອນຕົ້ນປີ 2023 ຄະນະກໍາມະການໄດ້ດໍາເນີນກອງປະຊຸມ 1 ຄັ້ງ ເຊິ່ງໄດ້ປຶກສາຫາລື ແລະ ຮັບຮອງບາງເນື້ອໃນທີ່ສໍາຄັນດັ່ງນີ້:

- ຮັບຊາບການລາຍງານການຈັດຕັ້ງປະຕິບັດວຽກງານຄຸ້ມຄອງຄວາມສ່ຽງ ແລະ ການປະຕິບັດວຽກງານຕາມຫຼັກການບາເຊວ 2 ຂອງ ທຄຕລ;
- ເຫັນດີເປັນເອກະພາບກ່ຽວກັບການນໍາສະເໜີບັນຫາຕ່າງໆເພື່ອຮັບຮອງຈາກຄະນະກໍາມະການ ຖ້າວຽກໃດດ່ວນແມ່ນເຫັນດີໃຫ້ນໍາສະເໜີຜ່ານຈົດຫມາຍວຽນໄດ້;
- ສ້າງເອກະສານຄຸ້ມຄອງຄວາມສ່ຽງ 09 ສະບັບ (ນະໂຍບາຍ ຈໍານວນ 08 ສະບັບ, ຄູ່ມື 01 ສະບັບ); ປັບປຸງລະບົບສໍາລັບວຽກງານບາເຊວ 2 (ຄວາມສ່ຽງດ້ານການດໍາເນີນງານ) 01 ລະບົບ ຄື: ລະບົບລາຍງານເຫດການສູນເສຍ ແລະ ສໍາເລັດການທົດສອບພາວະວິກິດ ກ່ຽວກັບກັບບັນດາປັດໄຈທີ່ສົ່ງຜົນຕໍ່ການສ້າງກໍາໄລຂອງ ທຄຕລ.

### 3.3 ຄະນະກໍາມະການຄັດເລືອກ ແລະ ກໍານົດຄ່າຕອບແທນ

ຄະນະກໍາມະການ ໄດ້ເອົາໃຈໃສ່ໃນການຄົ້ນຄວ້າພິຈາລະນາເປົ້າໝາຍບຸກຄະລາກອນສໍາລັບການປັບປຸງຄະນະຜູ້ບໍລິຫານ ແລະ ສະພາບໍລິຫານຂອງ ທຄຕລ ໃນແຕ່ລະໄລຍະ ພ້ອມທັງຄົ້ນຄວ້າ ແລະ ຕິດຕາມການປະຕິບັດເງິນເດືອນ ແລະ ຄ່າຕອບແທນໃຫ້ແກ່ພະນັກງານ ແລະ ຜູ້ບໍລິຫານ ທຄຕລ ທຸກລະດັບໃຫ້ສອດຄ່ອງກັບນະໂຍບາຍທີ່ວາງໄວ້ ແນໃສ່ຮັກສາຜົນປະໂຫຍດຂອງ ທຄຕລ ແລະ ຜູ້ຖືຮຸ້ນ. ນອກຈາກນັ້ນ, ຄະນະກໍາມະການຍັງໄດ້ຄົ້ນຄວ້າບັນດາລະບຽບການຕ່າງໆ ເພື່ອໃຫ້ສາມາດນໍາສະເໜີຮັບຮອງຜ່ານສະພາບໍລິຫານ ຕາມຂັ້ນຕອນ.

### 3.4 ຄະນະກຳມະການຄຸ້ມຄອງບໍລິຫານ

ຄະນະກຳມະການຄຸ້ມຄອງບໍລິຫານ ໄດ້ເອົາໃຈໃສ່ຕິດຕາມຊຸກຍູ້ໃຫ້ທິດຊີ້ນຳຕໍ່ຜົນການດຳເນີນທຸລະກິດຂອງ ທຄຕລ ເປັນປະຈຳ ຢ່າງໃກ້ຊິດ ໂດຍສະເພາະແມ່ນວຽກງານການຂະຫຍາຍສິນເຊື່ອ, ການເກັບກູ້ໜີ້ NPL ແລະ ວຽກງານການບໍລິຫານທຶນແຕ່ລະໄລຍະ; ພ້ອມທັງ ໄດ້ຕິດຕາມການຈັດຕັ້ງປະຕິບັດຜົນການດຳເນີນທຸລະກິດ, ແຜນດຳເນີນງານປະຈຳປີ, ແຜນຍຸດທະສາດໄລຍະຍາວ ແລະ ການປະຕິບັດແຜນງານ, ໂຄງການຕ່າງໆ; ຕິດຕາມວຽກງານການບໍລິຫານ ແລະ ການພັດທະນາບຸກຄະລາກອນ ຂອງ ທຄຕລ ຢ່າງໃກ້ຊິດ. ໃນໄລຍະ 6 ເດືອນຕົ້ນປີ 2023 ຄະນະກຳມະການໄດ້ເປີດກອງປະຊຸມ ຈຳນວນ 1 ຄັ້ງ ແລະ ຮັບຮອງບາງບັນຫາຜ່ານຈົດໝາຍວຽນ ເຊິ່ງໄດ້ຮັບຮອງບາງເນື້ອໃນທີ່ສຳຄັນດັ່ງນີ້:

- ຮັບຊາບການລາຍງານຜົນການດຳເນີນທຸລະກິດປະຈຳປີ 2022, ເດືອນ 1/2023, ໄຕມາດ 01/2023 ແລະ ໄຕມາດ 02/2023;
- ຮັບຮອງຕົວເລກແຜນການດຳເນີນທຸລະກິດ ປະຈຳປີ 2023 ຂອງ ທຄຕລ ເພື່ອນຳສະເໜີສະພາບໍລິຫານພິຈາລະນາ;
- ຮັບຮອງແຜນຈັດກອງປະຊຸມສະພາບໍລິຫານ ແລະ ແຜນກອງປະຊຸມຜູ້ຖືຮຸ້ນ ເພື່ອນຳສະເໜີສະພາບໍລິຫານພິຈາລະນາ.

### 3.5 ຄະນະກຳມະການກວດສອບ

ຄະນະກຳມະການກວດສອບ ໄດ້ເອົາໃຈໃສ່ໃນການຊີ້ນຳວຽກງານກວດສອບພາຍໃນ ຂອງ ທຄຕລ ແລະ ກຳນົດນະໂຍບາຍກ່ຽວກັບການກວດສອບພາຍໃນ, ພິຈາລະນານຳສະເໜີການແຕ່ງຕັ້ງຜູ້ກວດສອບອິດສະຫຼະ, ປະສານງານກັບຜູ້ກວດສອບພາຍນອກທີ່ມາຈາກຜູ້ຄຸ້ມຄອງແຕ່ລະພາກສ່ວນ ແລະ ອົງການລັດທີ່ກ່ຽວຂ້ອງ. ຄະນະກຳມະການຍັງໄດ້ເອົາໃຈໃສ່ຄົ້ນຄວ້າ ແລະ ຊີ້ນຳ ທຄຕລ ໃນການແກ້ໄຂບັນດາຂໍ້ພົບເຫັນ ຫຼື ຄຳແນະນຳຂອງຜູ້ກວດສອບ ເພື່ອປັບປຸງແຕ່ລະວຽກງານໃຫ້ດີຂຶ້ນຕາມຂໍ້ພົບເຫັນ ຫຼື ຄຳແນະນຳດັ່ງກ່າວ. ຊຸກຍູ້ໃຫ້ ທຄຕລ ປະຕິບັດຕາມຫຼັກການບັນຊີ ແລະ ການເຄື່ອນໄຫວໃຫ້ຢູ່ບົນພື້ນຖານລະບຽບຫຼັກການທີ່ກຳນົດໄວ້ ພ້ອມທັງໄດ້ຕິດຕາມວຽກງານການເປີດເຜີຍຂໍ້ມູນຢ່າງເປັນປົກກະຕິ ເພື່ອໃຫ້ສອດຄ່ອງກັບລະບຽບການເປີດເຜີຍຂໍ້ມູນທີ່ກຳນົດໄວ້. ຄະນະກະມະການໄດ້ຈັດກອງປະຊຸມຂອງຕົນຂຶ້ນຢ່າງເປັນປົກກະຕິຕາມຮອບວຽນ ທີ່ໄດ້ກຳນົດໄວ້ໃນລະບຽບຂອງ ທຄຕລ ເຊິ່ງໃນໄລຍະ 6 ເດືອນຕົ້ນປີ 2023 ຄະນະກຳມະການໄດ້ເປີດກອງປະຊຸມ 1 ຄັ້ງ ເຊິ່ງໄດ້ຮັບຮອງບາງເນື້ອໃນສຳຄັນດັ່ງນີ້:

- ຮັບຊາບການລາຍງານຄື: ລາຍງານ ເອກະສານລາຍງານການເງິນ ທຄຕລ ປີ 2022 ກ່ອນການກວດສອບ; ລາຍງານຜົນກວດກາດ້ານບັນຊີຂອງພະແນກ ແລະ ສາຂາທົ່ວລະບົບ; ລາຍງານການຈັດຕັ້ງປະຕິບັດມາດຖານ IFRS ແລະ ການເປີດເຜີຍຂໍ້ມູນຂອງ ທຄຕລ ແລະ ລາຍງານວຽກງານກວດກາພາຍໃນ ປະຈຳປີ 2022;
- ຮັບຮອງໂດຍພື້ນຖານຕໍ່ກັບທິດໃນການແບ່ງປັນກຳໄລປະຈຳປີ 2022 ເປັນເງິນສົດ 100 ກີບ/ຮຸ້ນ ເພື່ອນຳສະເໜີ ຂໍການອານຸມັດຈາກ ທຫລ ໃນການຈັດຕັ້ງປະຕິບັດ ແລະ ນຳສະເໜີຜ່ານກອງປະຊຸມສະພາບໍລິຫານ ແລະ ກອງປະຊຸມຜູ້ຖືຮຸ້ນ ທຄຕລ ຮັບຮອງ;
- ຮັບຮອງໂດຍພື້ນຖານເອົາ ບໍລິສັດ PWC ເປັນຜູ້ກວດສອບ ທຄຕລ ປະຈຳປີ 2023 ເພື່ອນຳສະເໜີຜ່ານກອງປະຊຸມສະພາບໍລິຫານ ແລະ ກອງປະຊຸມຜູ້ຖືຮຸ້ນ ທຄຕລ ຮັບຮອງ;
- ໃນໄລຍະ 6 ເດືອນຕົ້ນປີ 2023 ພະແນກກວດກາພາຍໃນໄດ້ກວດກາປົກກະຕິບັນດາພະແນກ, ສູນ, ສາຂາ, ຂະແໜງ ແລະ ໜ່ວຍບໍລິການ ທົ່ວລະບົບ ຈຳນວນ 43 ພາກສ່ວນ; ກວດກາສຸກເສີນ ບັນດາຂະແໜງ ແລະ ໜ່ວຍບໍລິການ ທັງໝົດ 59 ຄັ້ງ; ລົງກວດກາຕາມທິດຊີ້ນຳ 1 ຄັ້ງ, ກວດກາສະເພາະກິດ 2 ຄັ້ງ ແລະ ກວດກາສະເພາະດ້ານ 1 ຄັ້ງ.

## V. ຄວາມຮັບຜິດຊອບໃນສັງຄົມ:

### 1. ການມອບພັນທະຕ່າງໆຂອງ ທຄຕລ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ໄດ້ປະຕິບັດຕາມລະບຽບກົດໝາຍສ່ວຍສາອາກອນ ຊຶ່ງໄດ້ມອບພັນທະອາກອນຕ່າງໆ ໃຫ້ແກ່ລັດຖະບານ ໃນໄລຍະ 6 ເດືອນປີ 2023 ລວມເປັນຈຳນວນເງິນທັງໝົດ **39.319** ລ້ານກີບ ມີລາຍລະອຽດລຸ່ມນີ້:ຫົວໜ່ວຍ: ລ້ານກີບ

| ລ/ດ | ເນື້ອໃນ | 6 ເດືອນປີ 2023 | ປີ 2022 |
|---|---|---|---|
| **1** | ອາກອນກຳໄລ | 21.605,70 | 5.719,72 |
| **2** | ອາກອນມູນຄ່າເພີ່ມ | 978,45 | 3.813,74 |
| **3** | ອາກອນລາຍໄດ້ພະນັກງານ | 16.201,88 | 23.123,86 |
| **4** | ອາກອນຊົມໃຊ້ | - | - |
| **5** | ອາກອນກຳໄລນິຕິບຸກຄົນຜູ້ທີ່ບໍ່ມີພູມລຳເນົາ ຢູ່ ສປປ ລາວ | 445,33 | 755,72 |
| **6** | ອາກອນອື່ນໆ | 87,71 | 6.998,84 |
| **ລວມທັງໝົດ** | | **39.319,08** | **40.411,88** |

### 2. ການມີສ່ວນຮ່ວມໃນວຽກງານສັງຄົມ ແລະ ອຸປະຖຳສັງຄົມ

ຄຽງຄູ່ກັບການດຳເນີນທຸລະກິດ ແລະ ປະຕິບັດວຽກງານດ້ານອື່ນໆ, ຄະນະຜູ້ບໍລິຫານ ແລະ ພະນັກງານຂອງ ທຄຕລ ທຸກຄົນ ລ້ວນແຕ່ໄດ້ເອົາໃຈໃສ່ໃນການປະກອບສ່ວນ ແລະ ມີສ່ວນຮ່ວມໃນໂຄງການຄວາມຮັບຜິດຊອບຕໍ່ສັງຄົມ (Corporate Social Responsibility ຫຼື CSR) ເຊິ່ງເປັນໜຶ່ງໃນບັນດາຄຸນຄ່າຫຼັກຂອງ ທຄຕລ ເຊິ່ງມີລາຍລະອຽດລຸ່ມນີ້:

ການນຳໃຊ້ທ່າແຮງທາງດ້ານເທັກໂນໂລຢີ ແລະ ຄວາມທັນສະໄໝຂອງ ທຄຕລ ໃນການພັດທະນາຜະລິດຕະພັນມາຮັບໃຊ້ສັງຄົມ ເຊັ່ນ: BCEL One Heart ເຊິ່ງເຮັດໜ້າທີ່ເປັນເຄື່ອງມື ແລະ ເປັນສື່ກາງໃນການຮັບບໍລິຈາກເງິນຊ່ວຍເຫຼືອສັງຄົມ ທີ່ອຳນວຍຄວາມສະດວກໃຫ້ທັງຜູ້ຂໍຮັບບໍລິຈາກ ແລະ ຜູ້ສະໝັກໃຈບໍລິຈາກ ທີ່ໄດ້ເປີດຮັບບໍລິຈາກ ພາຍໃນ 6 ເດືອນປີ 2023 ໄດ້ 4 ໂຄງການ ຄື: ໂຄງການລະດົມທຶນຊ່ວຍເຫຼືອປຸກສ້າງຫໍພັກນັກຮຽນໂຮງຮຽນປະຖົມ ແລະ ມັດທະຍົມຕອນຕົ້ນພູທອດ ເມືອງງາ ແຂວງອຸດົມໄຊ; ໂຄງການ 20.000 ກີບ ເພື່ອນ້ອງ; ໂຄງການຊ່ວຍເຫຼືອແມ່ຕູ້ເບີຍ ທີ່ຖືກອັກຄີໄພ ໄຟໄໝ້ເຮືອນຈົນໝົດຫຼັງ ແລະ ໂຄງການກໍ່ສ້າງໂຮງຮຽນປະຖົມບ້ານຖ້ຳເດັ່ງ ເມືອງກະລຶມ ແຂວງເຊກອງ ເຊິ່ງມີຜູ້ຮ່ວມບໍລິຈາກທັງໝົດ 1.981 ຄັ້ງ, ເປັນຈຳນວນເງິນທັງໝົດ 103,14 ລ້ານກີບ.

ພ້ອມດຽວກັນນັ້ນ, ທຄຕລ ໄດ້ປະກອບສ່ວນຊຸກຍູ້ ແລະ ຊ່ວຍເຫຼືອສັງຄົມຜ່ານຫຼາຍຮູບການ ເປັນຕົ້ນແມ່ນ ການອຸປະຖຳວຽກງານການສຶກສາ ແລະ ກິລາ, ວຽກງານສາທາລະນະສຸກ, ຊ່ວຍເຫຼືອຜູ້ປະສົບໄພທຳມະຊາດ, ຊຸກຍູ້ວັນບຸນສຳຄັນຕ່າງໆຂອງຊາດ ແລະ ອື່ນໆ ດ້ວຍການມອບເງິນສົດ, ວັດຖຸອຸປະກອນຕ່າງໆ ພາຍໃນ 6 ເດືອນປີ 2023 ຈຳນວນ 65 ລາຍການ ເປັນຈຳນວນເງິນທັງໝົດ 924,21 ລ້ານກີບ.

**ຜູ້ອຳນວຍການ**

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC

**ທ. ສາຍສະໝອນ ຈັນທະຈັກ**